# ແຈ້ງການກ່ຽວກັບການປົກປ້ອງສິດທິຕາມຂະບວນການຍຸຕິທຳ

ເດືອນກຸມພາ 2021



THE LEGAL FRAMEWORK
for the Child-Centered Special Education Process

Link to The Legal Framework

TEA
Texas Education Agency

Link to TEA Special Education

# ສາລະບານ

ແຈ້ງການກ່ຽວກັບການປົກປ້ອງສິດທິຕາມຂະບວນການຍຸຕິທຳ ........ 1
ສິດທິຂອງພໍ່ແມ່ຂອງເດັກພິການ ........ 1
ການປົກປ້ອງສິດທິຕາມຂະບວນການຍຸຕິທຳຢູ່ໃນການສຶກສາພິເສດ ........ 1
ພໍ່ແມ່ອຸປະຖຳເຮັດໜ້າທີ່ເປັນພໍ່ແມ່ ........ 1
ພໍ່ແມ່ຕົວແທນ ........ 2
ການຄົ້ນຫາເດັກ ........ 2
ໜັງສືແຈ້ງການລ່ວງໜ້າ ........ 3
ການຍິນຍອມຂອງພໍ່ແມ່ ........ 3
ລະບຽບຂັ້ນຕອນເມື່ອມີການໃສ່ລະບຽບວິໄນເດັກພິການ ........ 6
ສະຖານທີ່ໂຮງຮຽນເອກະຊົນແບບສະໝັກໃຈໂດຍພໍ່ແມ່ ........ 13
ການໂອນສິດຂອງພໍ່ແມ່ ........ 14
ຂໍ້ມູນການສຶກສາພິເສດ ........ 15
ການແກ້ໄຂຂໍ້ຂັດແຍ້ງ ........ 15
ການອຳນວຍຄວາມສະດວກໃຫ້ແກ່ IEP ຂອງລັດ ........ 16
ການບໍລິການ ການໄກ່ເກ່ຍ ........ 16
ຂະບວນການແກ້ໄຂຄຳຮ້ອງທຸກດ້ານການສຶກສາພິເສດ ........ 17
ຂັ້ນຕອນດຳເນີນການຄົບຕາມກົດໝາຍ ........ 19
ຂໍ້ມູນຕິດຕໍ່ ........ 28
ຂໍ້ມູນການຕິດຕໍ່ແກ້ໄຂຂໍ້ຂັດແຍ່ງ ........ 28

ລິຂະສິດ 2021. ໜ່ວຍງານດ້ານການສຶກສາແຫ່ງລັດເທັກຊາສ (TEA). ສະຫງວນລິຂະສິດ..

# *ແຈ້ງການກ່ຽວກັບການປົກປ້ອງສິດທິຕາມຂະບວນການຍຸຕິທຳ*

# *ສິດທິຂອງພໍ່ແມ່ຂອງເດັກພິການ*

ກົດໝາຍວ່າດ້ວຍການສຶກສາສຳລັບຄົນພິການ (**IDEA**), ດັ່ງທີ່ໄດ້ຮັບການດັດແກ້ໃນປີ 2004, ຮຽກຮ້ອງໃຫ້ໂຮງຮຽນອອກໜັງສືແຈ້ງເຖິງພໍ່ແມ່ຂອງເດັກພິການໂດຍໃຫ້ມີຄຳອະທິບາຍທີ່ຄົບຖ້ວນກ່ຽວກັບການປົກປ້ອງສິດທິຕາມຂະບວນການຍຸຕິທຳທີ່ມີໃຫ້ພາຍໃຕ້ IDEA ແລະ ລະບຽບການປະຕິບັດຂອງມັນ. ເອກະສານສະບັບນີ້ ທີ່ສ້າງຂຶ້ນໂດຍໜ່ວຍງານດ້ານການສຶກສາແຫ່ງລັດເທັກຊັສ໌ (**TEA**) ມີຄວາມຕັ້ງໃຈໃຫ້ສອດຄ່ອງກັບເງື່ອນໄຂຂອງແຈ້ງການສະບັບນີ້ ແລະ ຊ່ວຍພໍ່ແມ່ຂອງເດັກພິການໃຫ້ເຂົ້າໃຈສິດທິຂອງພວກເຂົາພາຍໃຕ້ IDEA.

## ການປົກປ້ອງສິດທິຕາມຂະບວນການຍຸຕິທຳຢູ່ໃນການສຶກສາພິເສດ

ພາຍໃຕ້ IDEA, ຄຳວ່າ ພໍ່ແມ່ ໝາຍເຖິງພໍ່ແມ່ຜູ້ໃຫ້ກຳເນີດ, ພໍ່ແມ່ບຸນທຳ, ພໍ່ແມ່ອຸປະຖຳຜູ້ທີ່ຖືກຕ້ອງຕາມເງື່ອນໄຂຂອງລັດ, ຜູ້ປົກຄອງ, ບຸກຄົນທີ່ເຮັດໜ້າທີ່ແທນພໍ່ແມ່ຜູ້ໃຫ້ກຳເນີດ ຫຼື ພໍ່ແມ່ບຸນທຳເຊິ່ງລວມມີ ພໍ່ເຖົ້າແມ່ເຖົ້າ, ພໍ່ແມ່ລ້ຽງ ຫຼື ຍາດພີ່ນ້ອງທີ່ເດັກອາໄສຢູ່ນຳ, ບຸກຄົນທີ່ຮັບຜິດຊອບຕາມກົດໝາຍຕໍ່ສະຫວັດດີພາບຂອງເດັກ ຫຼື ພໍ່ແມ່ຕົວແທນ. ຄຳວ່າ ພາສາຕົ້ນຕໍ ເມື່ອນຳໃຊ້ກັບຄົນທີ່ມີຄວາມຊຳນານດ້ານພາສາອັງກິດທີ່ຈຳກັດ ໝາຍເຖິງ ພາສາທີ່ນຳໃຊ້ຢ່າງເປັນປົກກະຕິ ໂດຍບຸກ ຄົນນັ້ນ ແລະ ເມື່ອໃຊ້ກັບຄົນຫູໜວກ ຫຼື ມີບັນຫາການໄດ້ຍິນ, ພາສາຕົ້ນຕໍແມ່ນຮູບແບບການສື່ສານທີ່ຄົນດັ່ງກ່າວ ໄດ້ນຳໃຊ້ຢ່າງເປັນປົກກະຕິ.
ໂຮງຮຽນຈຳເປັນຕ້ອງສົ່ງ ແຈ້ງການກ່ຽວກັບ ການປົກປ້ອງສິດທິຕາມຂະບວນການຍຸຕິທຳ ໃຫ້ທ່ານພຽງໜຶ່ງຄັ້ງຕໍ່ໜຶ່ງສົກຮຽນ, ເວັ້ນແຕ່ວ່າໂຮງຮຽນ ຕ້ອງສົ່ງສຳເນົາອີກສະບັບຂອງ ເອກະສານນັ້ນໃຫ້ແກ່ທ່ານ: ເມື່ອສົ່ງຕໍ່ເບື້ອງຕົ້ນ ຫຼື ຄຳຮ້ອງຂອງທ່ານສຳລັບການປະເມີນຜົນ;
ເມື່ອໄດ້ຮັບຄຳຮ້ອງທຸກການສຶກສາພິເສດທີ່ຍື່ນຕໍ່ TEA;
ເມື່ອໄດ້ຮັບຄຳຮ້ອງທຸກຂະບວນການໄຕ່ສວນຕາມກົດໝາຍຄັ້ງທຳອິດໃນສົກຮຽນ; ເມື່ອທຳການຕັດສິນເພື່ອດຳເນີນມາດຕະການລົງໂທດທີ່ຖືເປັນການປ່ຽນແປງການຈັດເຂົ້າ; ຫຼື ເມື່ອທ່ານຮ້ອງຂໍ.

ທ່ານ ແລະ ໂຮງຮຽນທຳການຕັດສິນໃຈກ່ຽວກັບໂຄງການດ້ານການສຶກສາຂອງລູກທ່ານ ໂດຍຜ່ານ ຄະນະກຳມະການຮັບເຂົ້າຮຽນ, ການທົບທວນ ແລະ ການໄລ່ອອກ (**ARD**). ຄະນະກຳມະການ ARD ຕັດສິນວ່າລູກຂອງທ່ານຜ່ານຄຸນ ສົມບັດສຳລັບການສຶກສາພິເສດ ແລະ ບໍລິການທີ່ກ່ຽວຂ້ອງບໍ່. ຄະນະ ກຳມະການ ARD ພັດທະນາ, ທົບທວນ ແລະ ທວນຄືນໂຄງການດ້ານການສຶກສາສ່ວນບຸກຄົນ (**IEP**) ຂອງລູກທ່ານ ແລະ ຕັດສິນການຈັດເຂົ້າສູ່ດ້ານການສຶກສາຂອງລູກທ່ານ.
ຂໍ້ມູນເພີ່ມເຕີມກ່ຽວກັບບົດບາດຂອງ ຄະນະກຳມະ ການ ARD ແລະ IDEA ແມ່ນມີໄວ້ໃຫ້ຈາກໂຮງຮຽນຂອງທ່ານໃນເອກະສານທີ່ຄູ່ກັນ *ຄຳແນະນຳສຳລັບພໍ່ແມ່ ກ່ຽວກັບຂະບວນການຮັບເຂົ້າຮຽນ, ການທົບທວນ ແລະ ການໄລ່ອອກ* (Link: fw.escapps.net).

## ພໍ່ແມ່ອຸປະຖຳເຮັດໜ້າທີ່ເປັນພໍ່ແມ່

ພາຍໃຕ້ກົດໝາຍ IDEA, ພໍ່ແມ່ອຸປະຖຳສາມາດເຮັດໜ້າທີ່ເປັນພໍ່ແມ່ໄດ້ ເວັ້ນເສຍແຕ່ວ່າກົດໝາຍ ຫຼື ກົດໝາຍຂອງລັດຫ້າມ ຫຼື ເວັ້ນເສຍແຕ່ພັນທະສັນຍາກັບລັດ ຫຼື ໜ່ວຍງານທ້ອງຖິ່ນຫ້າມພໍ່ແມ່ອຸປະຖຳບໍ່ໃຫ້ເຮັດໜ້າທີ່ເປັນພໍ່ແມ່.
ທີ່ລັດ Texas, ຖ້າທ່ານແມ່ນພໍ່ແມ່ອຸປະຖຳຂອງເດັກພິການ, ທ່ານສາມາດເຮັດໜ້າທີ່ເປັນພໍ່ແມ່ໄດ້
ຖ້າທ່ານເຫັນດີທີ່ຈະເຂົ້າຮ່ວມໃນການຕັດສິນໃຈກ່ຽວກັບການສຶກສາພິເສດ ແລະ
ຖ້າທ່ານສຳເລັດໂຄງການການຝຶກອົບຮົມທີ່ຈຳເປັນກ່ອນກອງປະຊຸມຂອງຄະນະກຳມະການ ARD ຄັ້ງຖັດໄປຂອງລູກ ທ່ານ, ແຕ່ບໍ່ໃຫ້ກາຍ 90 ວັນຫລັງຈາກທີ່ທ່ານເລີ່ມເຮັດ ໜ້າທີ່ເປັນພໍ່ແມ່ເພື່ອຈຸດປະສົງຂອງການຕັດສິນໃຈກ່ຽວກັບການສຶກສາພິເສດສຳລັບເດັກ. ທັນທີທີ່ທ່ານສຳເລັດໂຄງການການຝຶກອົບຮົມທີ່ອະນຸມັດ, ທ່ານບໍ່ຈຳເປັນຕ້ອງຝຶກອົບຮົມຄືນເພື່ອເຮັດໜ້າທີ່ເປັນພໍ່ແມ່ໃຫ້ແກ່ເດັກຄົນເດີມ ຫຼື ເປັນພໍ່ແມ່ ຫຼື ພໍ່ແມ່ ຕົວແທນໃຫ້ແກ່ເດັກຄົນອື່ນອີກ.
ຖ້າໂຮງຮຽນຕັດສິນໃຈບໍ່ແຕ່ງຕັ້ງທ່ານເປັນພໍ່ແມ່ເພື່ອຈຸດປະສົງຂອງ

ການຕັດສິນໃຈກ່ຽວກັບການສຶກສາພິເສດ, ໂຮງຮຽນຕ້ອງມີແຈ້ງການທີ່ເປັນລາຍລັກອັກສອນໃຫ້ແກ່ທ່ານພາຍໃນເຈັດວັນຕາມປະຕິທິນຫລັງຈາກວັນທີທີ່ໄດ້ທຳການຕັດສິນໃຈ.
ແຈ້ງການນັ້ນ ຕ້ອງອະທິບາຍເຫດຜົນຂອງໜ່ວຍງານດ້ານການສຶກສາປະຈຳທ້ອງຖິ່ນ (**LEA**) ສຳລັບການ ຕັດສິນໃຈ ແລະ ຕ້ອງແຈ້ງໃຫ້ທ່ານຊາບວ່າທ່ານສາ
ມາດຍື່ນຄຳຮ້ອງທຸກກ່ຽວກັບການສຶກສາພິເສດເຖິງ TEA ໄດ້.

## ພໍ່ແມ່ຕົວແທນ

ຖ້າວ່າ, ຫຼັງຈາກທີ່ຜ່ານຄວາມພະຍາຍາມພໍສົມຄວນ, ໂຮງຮຽນບໍ່ສາມາດຊອກຫາພໍ່ແມ່ຂອງເດັກໄດ້, ພໍ່ແມ່ອຸປະຖຳບໍ່ເຕັມໃຈ ຫຼື ບໍ່ສາມາດມາເຮັດໜ້າທີ່ເປັນພໍ່ແມໄດ້,
ເດັກບໍ່ໄດ້ອາໄສໃນເຮືອນພັກອຸປະຖຳ ຫຼື
ເດັກເປັນເດັກໃນການຄຸ້ມຄອງຂອງສານ,
ໂຮງຮຽນຈະຕ້ອງແຕ່ງຕັ້ງພໍ່ແມ່ຕົວແທນ
ເພື່ອທຳໜ້າທີ່ເປັນພໍ່ແມ່ຂອງເດັກ, ເວັ້ນແຕ່ວ່າ
ເດັກເປັນເດັກໃນການຄຸ້ມຄອງຂອງສານ ແລະ
ສານໄດ້ແຕ່ງຕັ້ງພໍ່ແມ່ຕົວແທນແລ້ວ.
ໂຮງຮຽນຍັງຈະຕ້ອງແຕ່ງຕັ້ງພໍ່ແມ່ຕົວແທນສຳລັບເດັກໄວໜຸ່ມໂຕຄົນດຽວບໍ່ມີເຮືອນຢູ່, ດັ່ງທີ່ນິຍາມໄວ້ໃນ
ກົດໝາຍວ່າດ້ວຍການຊ່ວຍເຫຼືອຄົນບໍ່ມີເຮືອນ McKinney-Vento.
ທັນທີທີ່ເປັນໄປໄດ້ຫຼັງຈາກແຕ່ງຕັ້ງພໍ່ແມ່ຕົວແທນ
ສຳລັບເດັກຜູ້ທີ່ບໍ່ມີເຮືອນຢູ່ ຫຼື ໃນການເບິ່ງແຍງແບບທົດແທນ, ໂຮງຮຽນຕ້ອງສະໜອງໜັງສືແຈ້ງການໄປຫາຜູ້ກະທຳການຕັດສິນໃຈດ້ານການສຶກສາ ແລະ ຜູ້ເຮັດວຽກສັງຄົມສົງເຄາະຂອງເດັກ. ສຳລັບຂໍ້ມູນເພີ່ມເຕີມ, ເຂົ້າໄປເບິ່ງທີ່ [Children and Youth Experiencing Homelessness (Link: bit.ly/39v6KzG)](bit.ly/39v6KzG).

ເພື່ອໃຫ້ມີສິດເຮັດໜ້າທີ່ເປັນພໍ່ແມ່ຕົວແທນ, ທ່ານຕ້ອງບໍ່ແມ່ນພະນັກງານຂອງ TEA, ຂອງໂຮງຮຽນ ຫຼື ຂອງໜ່ວຍງານໃດໆທີ່ກ່ຽວຂ້ອງກັບການສຶກສາ ຫຼື ການເບິ່ງແຍງເດັກ ແລະ ທ່ານຈະຕ້ອງ ບໍ່ມີຜົນປະໂຫຍດໃດໆທີ່ຂັດກັບຜົນປະໂຫຍດຂອງເດັກ.
ບຸກຄົນທີ່ຖືກແຕ່ງຕັ້ງເປັນພໍ່ແມ່ຕົວແທນ ຈະຕ້ອງມີຄວາມຮູ້ ແລະ ທັກສະທີ່ພຽງພໍ, ມີຄວາມເຕັມໃຈທີ່ຈະຮັບໃຊ້, ຕັດສິນຢ່າງອິດສະລະ ໃນການສະແຫວງຫາຜົນປະໂຫຍດໃຫ້ແກ່ເດັກ, ຮັບປະກັນວ່າສິດທິຕາມກົດໝາຍຂອງເດັກບໍ່ຖືກລະເມີດ, ຢ້ຽມຢາມເດັກ ແລະ ໂຮງຮຽນ, ທົບທວນບັນທຶກການຮຽນຂອງເດັກ, ຂໍຄຳປຶກສາຈາກບຸກຄົນທີ່ກ່ຽວຂ້ອງກັບການສຶກສາຂອງເດັກ, ເຂົ້າຮ່ວມກອງປະຊຸມຂອງຄະນະກຳ ມະການ ARD ແລະ ສຳເລັດໂຄງການຝຶກອົບຮົມ.
ບຸກຄົນທີ່ຖືກແຕ່ງຕັ້ງໂດຍໂຮງຮຽນເພື່ອເປັນພໍ່ແມ່ຕົວແທນຈະຕ້ອງສຳເລັດໂຄງການຝຶກອົບຮົມກ່ອນກອງປະຊຸມຄັ້ງຖັດໄປຂອງຄະນະກຳມະການ ARD ທີ່ຂຶ້ນແຜນໄວ້ແລ້ວ ຂອງລູກທ່ານ ແຕ່ບໍ່ໃຫ້ກາຍ 90 ວັນຫລັງຈາກວັນທີທີ່ໄດ້ຮັບການແຕ່ງຕັ້ງເບື້ອງຕົ້ນ ໃຫ້ເປັນພໍ່ແມ່ຕົວແທນ. ທັນທີທີ່ທ່ານສຳເລັດໂຄງ ການການຝຶກອົບຮົມທີ່ອະນຸມັດ, ທ່ານບໍ່ຈຳເປັນຕ້ອງຝຶກອົບ ຮົມຄືນ ເພື່ອເຮັດໜ້າທີ່ເປັນພໍ່ແມ່ໃຫ້ແກ່ເດັກຄົນເດີມ ຫຼື ເປັນພໍ່ແມ່ ຫຼື ພໍ່ແມ່ຕົວແທນໃຫ້ແກ່ເດັກຄົນອື່ນອີກ.

ສຳລັບຂໍ້ກຳນົດເພີ່ມເຕີມກ່ຽວກັບພໍ່ແມ່ຕົວແທນ, ກະລຸນາເບິ່ງ [19 TAC §89.1047 (Link: bit.ly/39B7jla)](bit.ly/39B7jla).

## ການຄົ້ນຫາເດັກ

ເດັກພິການທຸກຄົນທີ່ອາໄສຢູ່ໃນລັດ,
ຜູ້ທີ່ຈຳເປັນຕ້ອງໄດ້ຮັບການສຶກສາພິເສດ ແລະ ບໍລິການທີ່ກ່ຽວຂ້ອງ, ລວມທັງ ເດັກພິການທີ່ເຂົ້າ ໂຮງຮຽນເອກະຊົນ, ຈະຕ້ອງຖືກລະບຸຕົວຕົນ, ລະບຸທີ່ຢູ່ ແລະ ຖືກປະເມີນຜົນ. ຂະ ບວນການນີ້ເອີ້ນວ່າ *ການຄົ້ນຫາເດັກ.*

ໃນຖານະທີ່ເປັນສ່ວນໜຶ່ງຂອງການເຄື່ອນໄຫວຄົ້ນຫາເດັກ, LEA ຈະຕ້ອງຕີພິມ ຫຼື ປະກາດແຈ້ງການໃນໜັງສືພິມ ຫຼື ສື່ອື່ນໆ ຫຼື ທັງສອງເປັນຈຳນວນຫຼາຍສະບັບທີ່ພຽງພໍ
ເພື່ອແຈ້ງພໍ່ແມ່ໃຫ້ຮູ້ເຖິງການເຄື່ອນໄຫວທີ່ຈະລະບຸທີ່ຢູ່, ລະບຸຕົວຕົນ ແລະ ປະເມີນຜົນເດັກທີ່ຈຳເປັນຕ້ອງໄດ້ຮັບການສຶກສາພິເສດ ແລະ ບໍລິການທີ່ກ່ຽວຂ້ອງ.

ສຳລັບຄຳອະທິບາຍທີ່ລະອຽດກວ່າກ່ຽວກັບຄວາມຕ້ອງ ການຊອກຫາເດັກ, ກະລຸນາເຂົ້າອ່ານ [The Legal Framework for the Child-Centered Special Education Process (Link: fw.escapps.net).](fw.escapps.net)

## ໜັງສືແຈ້ງການລ່ວງໜ້າ

ທ່ານມີສິດທີ່ຈະໄດ້ຮັບຂໍ້ມູນທີ່ເປັນລາຍລັກອັກສອນ ກ່ຽວກັບການກະທຳຂອງໂຮງຮຽນເລື່ອງຄວາມຈຳເປັນຂອງການສຶກສາພິເສດຂອງລູກທ່ານ.
ໂຮງຮຽນຕ້ອງສົ່ງໜັງສືແຈ້ງການລ່ວງໜ້າໃຫ້ແກ່ ທ່ານກ່ອນທີ່ຈະສະເໜີການລິເລີ່ມ ຫຼື ປ່ຽນແປງການລະບຸຕົວຕົນ, ການປະເມີນຜົນ ຫຼື ການຈັດເຂົ້າສູ່ ດ້ານການສຶກສາຂອງລູກທ່ານ ຫຼື ການສຶກສາພາກລັດທີ່ເໝາະສົມໂດຍບໍ່ເສຍຄ່າ (FAPE) ທີ່ມອບໃຫ້ແກ່ລູກຂອງທ່ານ.
ທ່ານຍັງມີສິດໄດ້ຮັບໜັງສືແຈ້ງການລ່ວງໜ້າກ່ອນ ໂຮງຮຽນປະຕິເສດທີ່ຈະລິເລີ່ມ ຫຼື ປ່ຽນແປງການລະບຸຕົວຕົນ, ການປະເມີນຜົນ ຫຼື ການຈັດເຂົ້າສູ່ດ້ານການສຶກສາຂອງລູກທ່ານ ຫຼື FAPE ທີ່ ມອບໃຫ້ແກ່ລູກຂອງທ່ານ. ໂຮງຮຽນຕ້ອງສະໜອງໜັງສືແຈ້ງການລ່ວງໜ້າໂດຍບໍ່ຂຶ້ນກັບວ່າທ່ານເຫັນດີຫລືບໍ່ກໍຕາມຕໍ່ການປ່ຽນແປງນັ້ນ ຫຼື ໄດ້ຮ້ອງຂໍການ ປ່ຽນແປງ.

ໃນທັກຊັດ, ໂຮງຮຽນຕ້ອງໃຫ້ໜັງສືແຈ້ງການລ່ວງໜ້າ ເປັນລາຍລັກອັກສອນຢ່າງໜ້ອຍຫ້າວັນເຂົ້າໂຮງຮຽນກ່ອນ ທີ່ມັນຈະສະເໜີ ຫຼື ປະຕິເສດການກະທຳດັ່ງກ່າວ ເວັ້ນເສຍແຕ່ວ່າທ່ານເຫັນດີຕໍ່ກຳນົດເວລາທີ່ສັ້ນກວ່າ.

ໃນໜັງສືແຈ້ງການລ່ວງໜ້າ, ໂຮງຮຽນຈະຕ້ອງໃຫ້ມີ: ລາຍລະອຽດຂອງການກະທຳທີ່ໂຮງຮຽນສະເໜີ ຫຼື ປະຕິເສດທີ່ຈະດຳເນີນການ; ຄຳອະທິບາຍເຖິງເຫດຜົນທີ່ໂຮງຮຽນກຳລັງສະເໜີ ຫຼື ປະຕິເສດການກະທຳ ນັ້ນ; ລາຍລະອຽດຂອງຂັ້ນຕອນການປະເມີນຜົນແຕ່ ລະຢ່າງ, ການປະເມີນ, ບັນທຶກ ຫຼື ບົດລາຍງານທີ່ ໂຮງຮຽນໄດ້ນຳໃຊ້ໃນການຕັດສິນທີ່ຈະສະເໜີ ຫຼື ປະຕິເສດການກະທຳນັ້ນ; ຄຳຖະແຫຼງການທີ່ວ່າທ່ານ ໄດ້ຮັບການປົກປ້ອງພາຍໃຕ້ການປົກປ້ອງສິດທິຕາມຂະບວນການຍຸຕິທຳຂອງ IDEA; ຄຳອະທິບາຍເຖິງວິທີການເອົາສຳເນົາຂອງ *ແຈ້ງການກ່ຽວກັບການປົກປ້ອງສິດທິຕາມຂະບວນການຍຸຕິທຳ*; ຂໍ້ມູນຕິດຕໍ່ສຳລັບບຸກຄົນ ຫຼື ອົງກອນທີ່ສາມາດຊ່ວຍທ່ານໃຫ້ເຂົ້າໃຈ IDEA; ລາຍລະອຽດຂອງທາງເລືອກອື່ນໆ ທີ່ຄະນະກຳມະການ ARD ຂອງລູກທ່ານໄດ້ພິຈາລະນາ ແລະ ເຫດຜົນວ່າ ຍ້ອນຫຍັງທາງເລືອກເຫຼົ່ານັ້ນຈຶ່ງຖືກປະຕິເສດ; ແລະ ລາຍລະອຽດຂອງເຫດຜົນອື່ນໆທີ່ເຮັດໃຫ້ໂຮງຮຽນສະເໜີ ຫຼື ປະຕິເສດການກະທຳນັ້ນ.

ແຈ້ງການນັ້ນຕ້ອງຂຽນເປັນພາສາທີ່ສາມາດເຂົ້າໃຈໄດ້ສຳລັບຄົນທົ່ວໄປ ແລະ ຕ້ອງໄດ້ຮັບການແປພາສາ ໃຫ້ເປັນພາສາຕົ້ນຕໍຂອງທ່ານ ຫຼື ເປັນຮູບແບບອື່ນ ຂອງການສື່ສານ ເວັ້ນແຕ່ວ່າມັນເປັນໄປບໍ່ໄດ້ອີ່ຫລີທີ່ ຈະເຮັດແບບນັ້ນ.

ຖ້າພາສາຕົ້ນຕໍຂອງທ່ານ ຫຼື ຮູບແບບອື່ນຂອງການສື່ ສານບໍ່ແມ່ນພາສາຂຽນ, ໂຮງຮຽນຈະຕ້ອງແປແຈ້ງການນັ້ນດ້ວຍການເວົ້າ ຫຼື ດ້ວຍວິທີອື່ນໆເປັນພາສາ ຕົ້ນຕໍຂອງທ່ານ ຫຼື ຮູບແບບອື່ນຂອງການສື່ສານເພື່ອ ໃຫ້ທ່ານເຂົ້າໃຈໄດ້. ໂຮງຮຽນຈະຕ້ອງມີຫຼັກຖານທີ່ ເປັນລາຍລັກອັກສອນເພື່ອຢັ້ງຢືນວ່າສິ່ງນີ້ໄດ້ຮັບການປະຕິບັດສຳເລັດແລ້ວ.

ຖ້າວ່າ, ໃນເວລາໃດກໍຕາມຫລັງຈາກທີ່ໂຮງຮຽນເລີ່ມການສະໜອງການສຶກສາພິເສດ ແລະ ບໍລິການທີ່ກ່ຽວຂ້ອງໃຫ້ແກ່ລູກຂອງທ່ານ, ທ່ານຖອນການຍິນຍອມຂອງທ່ານຄືນສຳລັບບໍລິການນັ້ນ, ໂຮງຮຽນຕ້ອງຢຸດຕິການສະໜອງການສຶກສາພິເສດ ແລະ ບໍລິການທີ່ກ່ຽວຂ້ອງໃຫ້ແກ່ລູກຂອງທ່ານ. ເຖິງຢ່າງໃດກໍຕາມ, ກ່ອນຢຸດຕິບໍລິການ, ໂຮງຮຽນຈະຕ້ອງສົ່ງໜັງສືແຈ້ງການລ່ວງໜ້າໃຫ້ແກ່ທ່ານຢ່າງໜ້ອຍຫ້າມື້ເຂົ້າໂຮງຮຽນກ່ອນໜ້າການຢຸດເຊົາການໃຫ້ການບໍລິການ ນອກຈາກວ່າ ທ່ານຕົກລົງເຫັນດີກັບກຳນົດເວລາທີ່ສັ້ນກວ່າ.

## ການສົ່ງຈົດໝາຍທາງອີເລັກໂຕຼນິກ

ພໍ່ແມ່ຂອງເດັກພິການສາມາດເລືອກທີ່ຈະຮັບເອົາໜັງສືແຈ້ງການທາງເມວອີເລັກໂຕຼນິກ ຖ້າວ່າໂຮງຮຽນມີ ທາງເລືອກແບບນັ້ນໃຫ້.

## ການຍິນຍອມຂອງພໍ່ແມ່

ໂຮງຮຽນຕ້ອງໄດ້ຮັບການຍິນຍອມເປັນລາຍລັກອັກສອນຂອງທ່ານກ່ອນທີ່ຈະເຮັດສິ່ງໃດສິ່ງໜຶ່ງ. *ການຍິນຍອມເປັນລາຍລັກອັກສອນຂອງທ່ານ* ໝາຍຄວາມວ່າ: ທ່ານໄດ້ຮັບຂໍ້ມູນທັງໝົດທີ່ກ່ຽວຂ້ອງກັບການກະທຳທີ່ຮ້ອງຂໍການອະນຸຍາດຈາກທ່ານເປັນພາສາຕົ້ນຕໍຂອງທ່ານ ຫຼື ຮູບແບບອື່ນຂອງການສື່ສານ; ທ່ານເຂົ້າໃຈ ແລະ ເຫັນດີເປັນລາຍລັກອັກສອນຕໍ່ກັບການເຄື່ອນໄຫວທີ່ຮ້ອງຂໍການອະນຸຍາດຈາກທ່ານ ແລະ

ການຍິນຍອມເປັນລາຍລັກອັກສອນອະທິບາຍ ການກະທຳ ແລະ ບອກບັນທຶກທຸກຢ່າງທີ່ຈະເປີດເຜີຍ ແລະ ເປີດເຜີຍໃຫ້ໃຜແນ່; ແລະ ທ່ານເຂົ້າໃຈວ່າການ ໃຫ້ການຍິນຍອມຂອງທ່ານແມ່ນສະໝັກໃຈ ແລະ ສາ ມາດຖອນຄືນໃນເວລາໃດກໍໄດ້. ຖ້າທ່ານປະສົງທີ່ຈະຖອນການຍິນຍອມຂອງທ່ານຄືນສຳລັບການສະໜອງການສຶກສາພິເສ ດ ແລະ ບໍລິການທີ່ກ່ຽວຂ້ອງທີ່ສືບຕໍ່, ທ່ານຈະຕ້ອງດຳເນີນການຢ່າງເປັນລາຍລັກອັກສອນ. ຖ້າທ່ານໃຫ້ການຍິນຍອມ ແລະ ຖອນຄືນພາຍຫລັງ, ການຖອນຄືນຂອງທ່ານຈະບໍ່ມີຜົນຍ້ອນຫລັງ.

ໂຮງຮຽນຕ້ອງເກັບຮັກສາເອກະສານທີ່ບັນທຶກຄວາມພະຍາຍາມຕ່າງໆເພື່ອໃຫ້ໄດ້ການຍິນຍອມຂອງພໍ່ແມ່. ເອກະສານຕ້ອງລວມມີບັນທຶກຄວາມພະຍາຍາມຂອງໂຮງຮຽນເພື່ອໃຫ້ໄດ້ການຍິນຍອມເຊັ່ນ: ບັນທຶກການໂທລະສັບທີ່ລະອຽດ, ສຳເນົາຂອງຈົດໝາຍຕິດຕໍ່ ຫາກັນ ແລະ ບັນທຶກລະອຽດກ່ຽວກັບການຢ້ຽມຢາມ ຮອດເຮືອນ ຫຼື ບ່ອນເຮັດວຽກ.

## ການປະເມີນຜົນເບື້ອງຕົ້ນ

ກ່ອນເຮັດການປະເມີນຜົນເບື້ອງຕົ້ນຂອງລູກທ່ານເພື່ອຕັດສິນວ່າລູກທ່ານຜ່ານຄຸນນະສົມບັດເປັນເດັກພິການພາຍໃຕ້ **IDEA** ບໍ່, ໂຮງຮຽນຕ້ອງເອົາສຳເນົາຂອງ *ແຈ້ງການກ່ຽວກັບການປົກປ້ອງສິດທິຕາມຂະບວນການຍຸຕິທຳ* ໃຫ້ທ່ານ ແລະ ສິ່ງໜັງສືແຈ້ງການລ່ວງໜ້າກ່ຽວກັບການປະເມີນຜົນທີ່ສະເໜີ ແລະ ຕ້ອງໄດ້ຮັບການຍິນຍອມເປັນລາຍລັກອັກສອນຈາກທ່ານ. ໂຮງຮຽນຕ້ອງພະຍາ ຍາມໝັກສົມຄວນເພື່ອໃຫ້ໄດ້ການຍິນຍອມຂອງທ່ານສຳ ລັບການປະເມີນຜົນເບື້ອງຕົ້ນ. ການຍິນຍອມຂອງທ່ານສຳລັບການປະເມີນຜົນເບື້ອງຕົ້ນບໍ່ໄດ້ໝາຍຄວາມວ່າທ່ານໃຫ້ການຍິນຍອມແບບດຽວກັນແກ່ໂຮງຮຽນເພື່ອເລີ່ມການສະໜອງບໍລິການການສຶກສາພິເສດໃຫ້ແກ່ລູກຂອງທ່ານ. ຖ້າລູກຂອງທ່ານເປັນເດັກໃນການຄຸ້ມຄອງຂອງສານ ແລະ ບໍ່ໄດ້ອາໄສຢູ່ກັບທ່ານ, ໂຮງຮຽນບໍ່ຈຳເປັນຕ້ອງໄດ້ຮັບການຍິນຍອມຈາກທ່ານ ຖ້າພວກເຂົາບໍ່ສາມາດຊອກຫາທ່ານໄດ້ ຫຼື ຖ້າສິດທິການເປັນພໍ່ແມ່ ຂອງທ່ານຖືກຖອດຖອນ ຫຼື ຖືກມອບໝາຍໃຫ້ຄົນອື່ນ ໂດຍຄຳສັ່ງຂອງສານ.

ໂຮງຮຽນຕ້ອງໄດ້ພະຍາຍາມຢ່າງສົມເຫດສົມຜົນເພື່ອໃຫ້ໄດ້ຮັບການຍິນຍອມຂອງທ່ານ ສຳລັບການປະເມີນຜົນ ເບື້ອງຕົ້ນ. ການຍິນຍອມຂອງທ່ານສຳລັບການປະເມີນຜົນເບື້ອງຕົ້ນບໍ່ໄດ້ໝາຍຄວາມວ່າທ່ານຍັງໄດ້ໃຫ້ການຍິນຍອມຂອງທ່ານສຳລັບໂຮງຮຽນເພື່ອເລີ່ມຕົ້ນໃຫ້ການ ສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງແກ່ລູກ ຂອງທ່ານ. ຖ້າລູກຂອງທ່ານເປັນຜູ້ຢູ່ອາໄສຂອງລັດ ແລະ ບໍ່ໄດ້ຢູ່ກັບທ່ານ, ໂຮງຮຽນບໍ່ຈຳເປັນຕ້ອງໄດ້ຮັບ ການຍິນຍອມຂອງທ່ານຖ້າພວກເຂົາບໍ່ສາມາດຊອກຫາ ທ່ານ ຫຼື ຖ້າສິດຂອງພໍ່ແມ່ຂອງທ່ານໄດ້ຖືກຍຸບເລີກ ຫຼື ຖືກມອບໝາຍໃຫ້ຜູ້ອື່ນໂດຍຄຳສັ່ງສານ.

## ການບໍລິການເບື້ອງຕົ້ນ

ໂຮງຮຽນຂອງທ່ານຕ້ອງໄດ້ຮັບການຍິນຍອມເຫັນດີຈາກທ່ານກ່ອນທີ່ຈະໃຫ້ການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງແກ່ລູກຂອງທ່ານເປັນຄັ້ງທຳອິດ. ໂຮງຮຽນຕ້ອງໄດ້ພະຍາຍາມຢ່າງສົມເຫດສົມຜົນເພື່ອໃຫ້ໄດ້ຮັບຄວາມເຫັນດີຈາກທ່ານກ່ອນທີ່ຈະໃຫ້ການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງແກ່ລູກຂອງທ່ານເປັນຄັ້ງ ທຳອິດ. ຖ້າທ່ານບໍ່ຕອບສະໜອງຄຳຮ້ອງຂໍທີ່ຈະໃຫ້ການຍິນຍອມຂອງທ່ານໃຫ້ລູກຂອງທ່ານໄດ້ຮັບການສຶກສາພິ ເສດ ແລະ ການບໍລິການທີ່ກ່ຽວຂ້ອງເປັນເທື່ອທຳອິດ, ຫຼື ຖ້າທ່ານປະຕິເສດທີ່ຈະໃຫ້ການຍິນຍອມດັ່ງກ່າວ ຫຼື ຕໍ່ມາ ຖອນ (ຍົກເລີກ) ການຍິນຍອມຂອງທ່ານເປັນລາຍລັກ ອັກສອນ, ໂຮງຮຽນຂອງທ່ານອາດຈະບໍ່ໃຊ້ລະບຽບການ ປົກປ້ອງຄຸ້ມຄອງ (ເຊັ່ນການໄກ່ເກ່ຍ, ການຮ້ອງທຸກຕາມ ຕາມຂະບວນການທີ່ຄືບກຳນົດ, ກອງປະຊຸມແກ້ໄຂ, ຫຼື ການໄຕ່ສວນຄະດີຕາມກົດໝາຍທີ່ເປັນກາງ) ເພື່ອໃຫ້ໄດ້ ຮັບຂໍ້ຕົກລົງ ຫຼື ຄຳຕັດສິນວ່າການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງທີ່ແນະນຳໂດຍຄະນະກຳມະການ **ARD** ຂອງລູກທ່ານອາດຈະຖືກສະໜອງໃຫ້ແກ່ລູກຂອງທ່ານໂດຍບໍ່ມີການຍິນຍອມຂອງທ່ານ.

ຖ້າທ່ານປະຕິເສດທີ່ຈະໃຫ້ການຍິນຍອມຂອງທ່ານໃຫ້ລູກຂອງທ່ານໄດ້ຮັບການສຶກສາພິເສດ ແລະ ການບໍລິການທີ່ ກ່ຽວຂ້ອງເປັນຄັ້ງທຳອິດ, ຫຼື ຖ້າທ່ານບໍ່ຕອບສະໜອງຄຳ ຮ້ອງຂໍທີ່ຈະໃຫ້ການຍິນຍອມດັ່ງກ່າວ ຫຼື ຕໍ່ມາຖອນ (ຍົກເລີກ) ການຍິນຍອມຂອງທ່ານເປັນລາຍລັກອັກສອນ ແລະ

ໂຮງຮຽນບໍ່ໄດ້ສະໜອງການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງກັບທີ່ລູກໄດ້ຍິນຍອມເຫັນດີ ຂອງທ່ານ, ໂຮງຮຽນຂອງທ່ານບໍ່ໄດ້ລະເມີດຂໍ້ກໍານົດທີ່ຈະ ເຮັດໃຫ້ **FAPE** ມີໃຫ້ແກ່ລູກຂອງທ່ານສໍາລັບຄວາມລົ້ມເຫຼວໃນການໃຫ້ບໍລິການເຫຼົ່ານັ້ນແກ່ລູກຂອງທ່ານ; ແລະ ບໍ່ຈໍາເປັນຕ້ອງມີກອງປະຊຸມຄະນະກໍາມະການ **ARD** ຫຼື ພັດທະນາ **IEP** ສໍາລັບລູກຂອງທ່ານ ສໍາລັບການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງ ທີ່ໄດ້ຮັບການຍິນຍອມຈາກທ່ານ.

ຖ້າທ່ານຖອນຄືນ (ຍົກເລີກ) ການຍິນຍອມຂອງທ່ານ ເປັນລາຍລັກອັກສອນໃນຈຸດເວລາໃດໜຶ່ງ ຫຼັງຈາກທີ່ລູກທ່ານໄດ້ຮັບການສຶກສາພິເສດ ແລະ ການບໍລິການທີ່ ກ່ຽວຂ້ອງ, ຫຼັງຈາກນັ້ນທາງໂຮງຮຽນອາດຈະບໍ່ສືບຕໍ່ໃຫ້ ການບໍລິການດັ່ງກ່າວ, ແຕ່ຕ້ອງໃຫ້ແຈ້ງການລ່ວງໜ້າ ໃຫ້ທ່ານເປັນລາຍລັກອັກສອນ, ຕາມທີ່ອະທິບາຍພາຍໃຕ້ ຫົວຂໍ້ແຈ້ງການທີ່ຂຽນເປັນລາຍລັກອັກສອນ, ກ່ອນທີ່ຈະ ຢຸດບໍລິການເຫຼົ່ານັ້ນ.

## ການປະເມີນຄືນໃໝ່

ໂຮງຮຽນຈະຕ້ອງໄດ້ຮັບການຍິນຍອມຂອງທ່ານເພື່ອປະເມີນຜົນລູກຂອງທ່ານຄືນໃໝ່ ເວັ້ນແຕ່ວ່າໂຮງຮຽນ ສາມາດສະແດງໃຫ້ເຫັນວ່າ ໄດ້ດໍາເນີນມາດຕະການທີ່ສົມເຫດສົມຜົນແລ້ວເພື່ອໃຫ້ໄດ້ການຍິນຍອມຂອງທ່ານແຕ່ທ່ານບໍ່ໄດ້ຕອບສະໜອງຫຍັງເລີຍ.

*ຂັ້ນຕອນການລົບລ້າງ* – ຖ້າລູກຂອງທ່ານໄດ້ເຂົ້າຮຽນໃນໂຮງຮຽນສາທາລະນະ ຫຼື ທ່ານກໍາລັງຊອກຫາການລົງທະບຽນລູກຂອງທ່ານຢູ່ໃນໂຮງຮຽນສາທາລະນະ ແລະ ທ່ານໄດ້ປະຕິເສດທີ່ຈະໃຫ້ການຍິນຍອມ ຫຼື ບໍ່ຕອບສະໜອງຄໍາຮ້ອງຂໍທີ່ຈະໃຫ້ການຍິນຍອມສໍາລັບການປະເມີນຜົນເບື້ອງຕົ້ນ, ໂຮງຮຽນຂອງທ່ານອາດຈະ, ແຕ່ບໍ່ຈໍາເປັນ ເພື່ອຊອກຫາການດໍາເນີນການປະເມີນຜົນເບື້ອງຕົ້ນ ຂອງລູກທ່ານໂດຍການນໍາໃຊ້ການໄກ່ເກ່ຍຂອງ IDEA ຫຼື ການຮ້ອງທຸກຕາມຫຼັກການຂອງກົດໝາຍ, ກອງປະຊຸມແກ້ ໄຂ, ແລະ ຂັ້ນຕອນການໄຕ່ສວນຂະບວນການຍຸຕິທໍາຕາມລໍາດັບ. ໂຮງຮຽນຂອງທ່ານຈະບໍ່ລະເມີດພັນທະຂອງຕົນໃນການຊອກຫາ, ກໍານົດ ແລະ ປະເມີນຜົນລູກຂອງທ່ານ (ຖ້າວ່າເດັກມີພັນທະຜູກພັນ) ຖ້າມັນບໍ່ດໍາເນີນການປະເມີນຜົນຂອງລູກທ່ານໃນສະພາບການເຫຼົ່ານີ້.

ຖ້າທ່ານປະຕິເສດທີ່ຈະຍິນຍອມຕໍ່ການປະເມີນຜົນຂອງລູກທ່ານ, ທາງໂຮງຮຽນອາດຈະ, ແຕ່ບໍ່ຈໍາເປັນຕ້ອງດໍາເນີນການປະເມີນຜົນຂອງລູກທ່ານໂດຍການນໍາໃຊ້ການໄກ່ເກ່ຍ, ການຮ້ອງທຸກຕາມຂະບວນການ, ກອງປະຊຸມແກ້ໄຂ, ແລະ ຂັ້ນຕອນການໄຕ່ສວນຂະບວນການຍຸຕິທໍາຕາມລໍາດັບ ເພື່ອຍຸດຕິການປະຕິເສດການຍິນຍອມຂອງທ່ານການປະເມີນຜົນໃໝ່ຂອງລູກທ່ານ. ເຊັ່ນດຽວກັບການປະເມີນຜົນເບື້ອງຕົ້ນ, ໂຮງຮຽນຂອງທ່ານບໍ່ໄດ້ລະເມີດພັນທະຂອງຕົນພາຍໃຕ້ກົດໝາຍ IDEA ຖ້າມັນປະຕິເສດທີ່ຈະດໍາເນີນການປະ ເມີນຜົນໃນລັກສະນະນີ້.

ຖ້າພໍ່ແມ່ຂອງເດັກນ້ອຍຜູ້ທີ່ໄດ້ຮັບການສຶກສາໃນເຮືອນ ຫຼື ຢູ່ໃນໂຮງຮຽນເອກະຊົນໂດຍພໍ່ແມ່ຈ່າຍຄ່າໃຊ້ຈ່າຍຂອງຕົນເອງບໍ່ໄດ້ໃຫ້ການຍິນຍອມ ສໍາລັບການປະເມີນຜົນເບື້ອງຕົ້ນ ຫຼື ການປະເມີນຄືນໃໝ່ ຫຼື ພໍ່ແມ່ບໍ່ຕອບສະໜອງຄໍາຮ້ອງຂໍໃຫ້ການຍິນຍອມ, ໂຮງຮຽນອາດຈະບໍ່ໃຊ້ຂັ້ນຕອນການ ຍົກເລີກການຍິນຍອມຂອງ IDEA ທີ່ໄດ້ອະທິບາຍຂ້າງເທິງ. ເຂດການສຶກສາກໍ່ບໍ່ຈໍາເປັນຕ້ອງພິຈາລະນາໃຫ້ລູກຂອງທ່ານມີສິດໄດ້ຮັບການບໍລິການທີ່ສະເໜີພາບ (ການບໍລິການທີ່ມີໃຫ້ສໍາລັບເດັກພິການໃນໂຮງຮຽນເອກະຊົນຈໍານວນໜຶ່ງ).

ການຍິນຍອມຂອງທ່ານບໍ່ມີຄວາມຈໍາເປັນກ່ອນທີ່ໂຮງຮຽນຈະທົບທວນຂໍ້ມູນທີ່ມີຢູ່ເຊິ່ງເປັນສ່ວນໜຶ່ງຂອງການປະເມີນຜົນລູກຂອງທ່ານ ຫຼື ການປະເມີນຜົນຄືນໃໝ່ ຫຼື ເຮັດການທົດສອບລູກຂອງທ່ານ ຫຼື ດໍາເນີນການປະເມີນຜົນແບບອື່ນໆໃຫ້ເດັກທຸກຄົນ ເວັ້ນແຕ່ວ່າຈໍາເປັນຕ້ອງມີການຍິນຍອມຂອງພໍ່ແມ່ສໍາລັບເດັກທຸກຄົນ. ໂຮງຮຽນບໍ່ສາມາດນໍາໃຊ້ການປະຕິເສດຂອງທ່ານຕໍ່ກັບ ການບໍລິການ ຫຼື ການເຄື່ອນໄຫວອຢ່າງໜຶ່ງເພື່ອມາປະຕິ ເສດທ່ານ ຫຼື ລູກຂອງທ່ານ ຈາກການໄດ້ຮັບການບໍລິການ, ຜົນປະໂຫຍດ ຫຼື ການເຄື່ອນໄຫວອື່ນໆ.

## ການປະເມີນຜົນດ້ານການສຶກສາເອກະລາດ

ການປະເມີນການສຶກສາທີ່ເປັນເອກະລາດ (IEE) ແມ່ນການປະເມີນຜົນທີ່ປະຕິບັດໂດຍຜູ້ທີ່ມີຄຸນວຸດທິທີ່ບໍ່ໄດ້ຈ້າງເຂົ້າເຮັດວຽກໂດຍໂຮງຮຽນ. ທ່ານມີສິດທີ່ຈະໄດ້ຮັບ IEE ຂອງລູກທ່ານຖ້າທ່ານບໍ່ເຫັນດີນໍາການປະເມີນຜົນຂອງລູກທ່ານທີ່ໂຮງຮຽນຂອງທ່ານໄດ້ຮັບ. ເມື່ອທ່ານຮ້ອງຂໍການປະເມີນ IEE, ໂຮງຮຽນຕ້ອງໃຫ້ຂໍ້ມູນກ່ຽວກັບເງື່ອນໄຂການປະເມີນຜົນຂອງມັນ ແລະ ບ່ອນທີ່ຈະໄດ້ຮັບ IEE.

### IEE ທີ່ຄ່າໃຊ້ຈ່າຍສາທາລະນະ

ຖ້າທ່ານບໍ່ເຫັນດີກັບການປະເມີນຜົນທີ່ໂຮງຮຽນຈັດໃຫ້, ທ່ານມີສິດທີ່ຈະຮ້ອງຂໍໃຫ້ລູກຂອງທ່ານໄດ້ຮັບ ການປະເມີນຜົນໂດຍບຸກຄົນທີ່ບໍ່ໄດ້ເຮັດວຽກໃຫ້ໂຮງຮຽນໂດຍລັດຈ່າຍໃຫ້.

ລັດຈ່າຍໃຫ້ ໝາຍຄວາມວ່າໂຮງຮຽນເປັນຜູ້ຈ່າຍສຳລັບຄ່າທັງໝົດຂອງການປະເມີນຜົນ ຫຼື ຮັບປະກັນວ່າການປະເມີນຜົນຖືກສະໜອງໃຫ້ໂດຍທ່ານບໍ່ໄດ້ ເສຍເງິນເລີຍ.

ທ່ານຮ້ອງຂໍການປະເມີນ IEE ຂອງລູກທ່ານເປັນຄ່າໃຊ້ ຈ່າຍສາທາລະນະ, ໂຮງຮຽນຂອງທ່ານຕ້ອງ, ໂດຍບໍ່ມີການເລື່ອນເວລາທີ່ບໍ່ຈຳເປັນ, ຢ່າງໃດຢ່າງໜຶ່ງທັງ: (a) ຍື່ນເລື່ອງຮ້ອງຮຽນຕາມຂະບວນການເພື່ອໃຫ້ມີການພິຈາລະນາຄະດີ ເພື່ອສະແດງການປະເມີນລູກຂອງທ່ານເໝາະ ສົມ **ຫຼື** (b) ຈັດໃຫ້ມີ IEE ເປັນຄ່າໃຊ້ຈ່າຍສາທາລະນະ, ເວັ້ນແຕ່ໂຮງຮຽນຈະສະແດງໃຫ້ເຫັນໃນການພິຈາລະນາຄະດີວ່າ ການປະເມີນລູກຂອງທ່ານທີ່ທ່ານໄດ້ຮັບນັ້ນບໍ່ເປັນໄປ ຕາມເກນຂອງໂຮງຮຽນ.
ທ່ານມີສິດໄດ້ຮັບ IEE ເປັນຄ່າໃຊ້ຈ່າຍສາທາລະນະພຽງຄັ້ງດຽວໃນແຕ່ລະຄັ້ງທີ່ໂຮງຮຽນດຳເນີນການປະເມີນຜົນທີ່ ທ່ານບໍ່ເຫັນດີນຳ.
ຖ້າທ່ານຮ້ອງຂໍໃຫ້ປະເມີນ IEE ຂອງລູກທ່ານ, ໂຮງຮຽນອາດຈະຖາມວ່າເປັນຫຍັງທ່ານຈຶ່ງຄັດຄ້ານການປະເມີນຜົນຂອງລູກທ່ານທີ່ໄດ້ຮັບຈາກໂຮງຮຽນຂອງທ່ານ. ເຖິງຢ່າງໃດກໍຕາມ, ໂຮງຮຽນຂອງທ່ານອາດຈະບໍ່ຕ້ອງການຄຳອະທິບາຍ ແລະ ບໍ່ຄວນຊັກຊ້າຢ່າງບໍ່ສົມເຫດສົມຜົນບໍ່ວ່າຈະໃຫ້ການປະເມີນ IEE ຂອງລູກທ່ານເປັນລາຍ ຈ່າຍສາທາລະນະ ຫຼື ຍື່ນຄຳຮ້ອງທຸກຕາມຂະບວນການ ເພື່ອຮ້ອງຂໍການໄຕ່ສວນຕາມຂະບວນການເພື່ອປ້ອງກັນການປະເມີນຜົນຂອງໂຮງຮຽນຂອງລູກທ່ານ.

### ເກນຂອງ IEE

ຖ້າ IEE ແມ່ນລັດເປັນຜູ້ຈ່າຍໃຫ້, ເກນທີ່ຈະໄດ້ຮັບການ ປະເມີນຜົນ, ລວມທັງສະຖານທີ່ຂອງການປະເມີນຜົນ ແລະ ຄຸນນະວຸດຂອງຜູ້ທົດສອບ, ຈະຕ້ອງເປັນເກນດຽວກັນທີ່ໂຮງຮຽນນຳໃຊ້ຕອນທີ່ລິເລີ່ມການປະເມີນຜົນເທົ່າທີ່ເກນເຫຼົ່ານັ້ນສອດຄ່ອງກັບສິດທິຂອງທ່ານຕໍ່ IEE. ຍົກເວັ້ນສຳລັບເກນກ່ອນໜ້າ, ໂຮງຮຽນບໍ່ສາມາດວາງເງື່ອນໄຂ ຫຼື ລຳດັບເວລາທີ່ກ່ຽວຂ້ອງກັບການໄດ້ຮັບ IEE ໂດຍລັດ ຈ່າຍໃຫ້.

### ຄຳຕັດສິນຂອງພະນັກງານໄຕ່ສວນ

ຖ້າໂຮງຮຽນຍື່ນຄຳຮ້ອງທຸກຕາມຂະບວນການເພື່ອຮ້ອງຂໍການໄຕ່ສວນຕາມຂະບວນການ ແລະ ພະນັກງານພິຈາລະນາຕັດສິນວ່າການປະເມີນຜົນຂອງໂຮງຮຽນແມ່ນເໝາະສົມ ຫຼື ວ່າ IEE ທີ່ທ່ານໄດ້ຮັບບໍ່ໄດ້ມາດຕະຖານ IEE ຂອງໂຮງຮຽນ, ໂຮງຮຽນບໍ່ຕ້ອງຈ່າຍຄ່າ IEE.

### IEE ທີ່ຈ່າຍດ້ວຍຕົນເອງ

ທ່ານມີສິດສະເໜີທີ່ຈະໄດ້ຮັບ IEE ທີ່ຈ່າຍຄ່າດ້ວຍຕົວ ທ່ານເອງ. ບໍ່ວ່າໃຜເປັນຜູ້ຈ່າຍກໍຕາມ, ໂຮງຮຽນຈະຕ້ອງ ພິຈາລະນາ IEE ເຂົ້າໃນການຕັດສິນໃຈທຸກຄັ້ງກ່ຽວກັບ ການສະໜອງ FAPE ໃຫ້ແກ່ລູກຂອງທ່ານຖ້າ IEE ນັ້ນ ຜ່ານເກນຂອງໂຮງຮຽນ. ທ່ານຍັງອາດຈະຍື່ນສະເໜີ IEE ເປັນຫຼັກຖານໃນຂະບວນການໄຕ່ສວນຕາມກົດໝາຍໄດ້.

### IEE ທີ່ສັ່ງໂດຍພະນັກງານໄຕ່ສວນ

ຖ້າພະນັກງານໄຕ່ສວນສັ່ງໃຫ້ IEE ເປັນສ່ວນໜຶ່ງຂອງຂະບວນການໄຕ່ສວນຕາມກົດໝາຍ, ໂຮງຮຽນ ຕ້ອງຈ່າຍຄ່າດັ່ງກ່າວ.

## ລະບຽບຂັ້ນຕອນເມື່ອມີການໃສ່ລະບຽບວິໄນເດັກພິການ

### ສິດອຳນາດຂອງພະນັກງານໃນໂຮງຮຽນ

**ການກຳນົດກໍລະນີ ຕໍ່ ກໍລະນີ**

ບຸກຄະລາກອນຂອງໂຮງຮຽນອາດຈະພິຈາລະນາສະຖານະການທີ່ເປັນເອກະລັກໃນແຕ່ລະກໍລະນີເມື່ອກຳນົດວ່າ ການປ່ຽນບ່ອນຮຽນ, ເຮັດຕາມຂໍ້ກຳນົດດັ່ງຕໍ່ໄປນີ້ກ່ຽວຂ້ອງກັບລະບຽບວິໄນ, ແມ່ນເໝາະສົມສຳລັບເດັກພິການທີ່ລະເມີດກົດໃນໂຮງຮຽນຂອງການປະພຶດຂອງນັກຮຽນ.

### ທົ່ວໄປ

ໃນຂອບເຂດທີ່ພວກເຂົາຍັງດຳເນີນການດັ່ງກ່າວ ສຳລັບ ເດັກນ້ອຍທີ່ບໍ່ມີຄວາມພິການ, ພະນັກງານຂອງໂຮງຮຽນ ອາດຈະເອົາເດັກພິການທີ່ລະເມີດກົດລະບຽບການປະພຶດ ຂອງນັກຮຽນຈາກສະຖານທີ່ຂອງລາວໃນປະຈຸບັນ ໄປສູ່ ສະຖານທີ່ການສຶກສາທາງເລືອກຊົ່ວຄາວທີ່ເໝາະສົມ (IAES), ສະຖານທີ່ອື່ນ ຫຼື ໂຈະ, ບໍ່ເກີນ 10 ວັນຕິດຕໍ່ກັນ. ພະນັກງານຂອງໂຮງຮຽນຍັງອາດຈະບັງຄັບການຍົກ ຍ້າຍ ເພີ່ມເຕີມຂອງເດັກນ້ອຍບໍ່ເກີນ 10 ວັນເຂົ້າຮຽນຕິດຕໍ່ກັນ ໃນປີຮຽນດຽວກັນສຳລັບເຫດການທີ່ບໍ່ຖືກຕ້ອງຂອງການປະພຶດຜິດທີ່ແຍກ ຈາກກັນ, ຕາບໃດທີ່ການໂຍກຍ້າຍເຫຼົ່ານັ້ນ ບໍ່ໄດ້ປະກອບມີການປ່ຽນແປງການບັນຈຸເຂົ້າຮຽນ (ເບິ່ງຫົວຂໍ້ການປ່ຽນແປງຂອງສະຖານທີ່ ຍ້ອນວ່າ ການໂຍກຍ້າຍວິໄນສຳລັບຄຳນິຍາມ).

ເມື່ອເດັກພິການໄດ້ຖືກໂຍກຍ້າຍອອກຈາກບ່ອນຢູ່ອາໄສຂອງລາວລວມທັງ ໝົດ 10 ວັນ ເຂົ້າຮຽນໃນປີຮຽນດຽວກັນ, ໂຮງຮຽນຕ້ອງໃຫ້ບໍລິການໃນ ຂອບເຂດທີ່ຕ້ອງການ ຢູ່ພາຍໃຕ້ການບໍລິການຫົວຂໍ້ຍ່ອຍ, ໃນລະຫວ່າງວັນຕໍ່ມາຂອງການໂຍກຍ້າຍໃນສົກຮຽນນັ້ນ.

**ອຳນາດເພີ່ມເຕີມ**

ຖ້າພຶດຕິກຳທີ່ລະເມີດຂໍ້ກຳນົດການປະພຶດຂອງນັກຮຽນບໍ່ ແມ່ນການ ສະແດງອອກເຖິງຄວາມພິການຂອງເດັກ ແລະ ການປ່ຽນແປງລະບຽບວິໄນຂອງການບັນຈຸເຂົ້າຮຽນເກີນ 10 ວັນເຂົ້າຮຽນ, ພະນັກງານໂຮງຮຽນອາດຈະນຳໃຊ້ລະບຽບວິໄນຕໍ່ເດັກພິການນັ້ນໃນລັກສະ ນະດຽວກັນ ແລະ ໄລຍະເວລາດຽວກັນກັບເດັກທີ່ບໍ່ພິການ, ຍົກເວັ້ນວ່າໂຮງຮຽນຕ້ອງໃຫ້ການບໍລິການແກ່ເດັກຜູ້ນັ້ນຕາມທີ່ໄດ້ອະທິບາ ຍໄວ້ຂ້າງລຸ່ມນີ້ພາຍໃຕ້ການບໍລິການ. ຄະນະກຳມະການ ARD ຂອງເດັກກຳນົດ IAES ສຳລັບການບໍລິການດັ່ງກ່າວ.

**ການບໍລິການ**

ເຂດການສຶກສາບໍ່ໄດ້ໃຫ້ການບໍລິການແກ່ເດັກພິການ ຫຼື ເດັກທີ່ບໍ່ພິການເຊິ່ງໄດ້ຖືກຍ້າຍອອກຈາກບ່ອນຢູ່ຂອງລາວໃນປະຈຸບັນເປັນເ ວລາ 10 ວັນ ຫຼື ໜ້ອຍກວ່າໃນສົກຮຽນນັ້ນ.

ເດັກພິການຜູ້ທີ່ຖືກຍ້າຍອອກຈາກບ່ອນຢູ່ຂອງເດັກໃນປະຈຸບັນຫຼາຍກວ່າ 10 ວັນເຂົ້າໂຮງຮຽນ ແລະ ພຶດຕິກຳບໍ່ແມ່ນການສະແດງອອກເຖິງຄວາມພິການຂອງເດັກ ຫຼື ຜູ້ທີ່ຖືກໂຍກຍ້າຍອອກພາຍໃຕ້ສະຖານະການພິເສດຕ້ອງ:

- ສືບຕໍ່ໄດ້ຮັບການບໍລິການດ້ານການສຶກສາ (ມີ FAPE), ເພື່ອເຮັດໃຫ້ເດັກສາມາດສືບຕໍ່ເຂົ້າ ຮ່ວມໃນຫຼັກສູດການສຶກສາທົ່ວໄປ, ເຖິງແມ່ນວ່າ ໃນສະຖານທີ່ອື່ນ (ນັ້ນອາດຈະແມ່ນ IAES), ແລະ ກ້າວໄປສູ່ການບັນລຸເປົ້າໝາຍທີ່ໄດ້ວາງ ໄວ້ໃນ IEP ຂອງເດັກ ແລະ
- ຕາມຄວາມເໝາະສົມ, ໄດ້ຮັບການປະເມີນພຶດຕິ ກຳທີ່ເປັນປະໂຫຍດ ແລະ ການບໍລິການແຊກ ແຊງດ້ານພຶດຕິກຳ ແລະ ການດັດແກ້ການປະ ພຶດ, ເຊິ່ງຖືກອອກແບບມາເພື່ອແກ້ໄຂການລະ ເມີດພຶດຕິກຳເພື່ອບໍ່ໃຫ້ມັນເກີດຂຶ້ນອີກ.

ຫຼັງຈາກເດັກພິການໄດ້ຖືກໂຍກຍ້າຍອອກຈາກບ່ອນທີ່ລາວຢູ່ໃນປະຈຸບັນເ ປັນເວລາ 10 ວັນໃນໂຮງຮຽນໃນສົກຮຽນດຽວກັນ ແລະ ຖ້າວ່າການໂຍກຍ້າຍໃນປະຈຸບັນແມ່ນ 10 ວັນເຂົ້າຮຽນຕິດຕໍ່ກັນ ຫຼື ໜ້ອຍກວ່າ ແລະ ຖ້າການໂຍກຍ້າຍບໍ່ແມ່ນການປ່ຽນແປງບ່ອນຮຽນ (ເບິ່ງຄຳນິຍາມຂ້າງລຸ່ມນີ້), ຫຼັງຈາກນັ້ນພະນັກງານໂຮງຮຽນ, ໃນການປຶກສາກັບຄູຂອງເດັກຢ່າງໜ້ອຍໜຶ່ງຄົນ, ກຳນົດຂອບເຂດການບໍລິການທີ່ຈຳເປັນເພື່ອໃຫ້ເດັກສາມາດສືບຕໍ່ເຂົ້າຮ່ວ ມໃນຫຼັກສູດການສຶກສາທົ່ວໄປ, ເຖິງແມ່ນວ່າຈະຢູ່ບ່ອນອື່ນ ແລະ ກ້າວໄປສູ່ການບັນລຸເປົ້າໝາຍທີ່ໄດ້ກຳນົດໄວ້ໃນ IEP ຂອງ ເດັກ.

ຖ້າການໂຍກຍ້າຍແມ່ນການປ່ຽນແປງການບັນຈຸເຂົ້າຮຽນ, ຄະນະກຳມະການ ARD ຂອງເດັກກຳນົດການບໍລິການທີ່ເໝາະສົມເພື່ອຊ່ວຍໃຫ້ເດັກສືບຕໍ່ເຂົ້າຮ່ວ ມຫຼັກສູດການສຶກສາທົ່ວໄປ, ເຖິງແມ່ນວ່າໃນສະຖານທີ່ອື່ນ (ນັ້ນອາດເປັນ IAES) ແລະ ກ້າວໄປສູ່ການບັນລຸເປົ້າໝາຍກຳນົດໄວ້ໃນ IEP ຂອງເດັກ.

**ການກຳນົດການສະແດງອອກ**

ພາຍໃນ 10 ວັນເຂົ້າໂຮງຮຽນຂອງການຕັດສິນໃຈໃດໆ ທີ່ຈະປ່ຽນການບັນຈຸເຂົ້າຮຽນຂອງເດັກພິການ ຍ້ອນການລະເມີດຂໍ້ກຳນົດການປະພຶດຂອງນັກຮຽນ (ຍົກເວັ້ນການໂຍກຍ້າຍທີ່ກຳນົດເປັນເວລາ 10 ວັນເຂົ້າໂຮງຮຽນຕິດຕໍ່ກັນ ຫຼື ໜ້ອຍກວ່າ ແລະ ບໍ່ແມ່ນການປ່ຽນແປງການບັນຈຸເຂົ້າຮຽນ), ໂຮງຮຽນ, ທ່ານ ແລະ ສະມາຊິກທີ່ກ່ຽວຂ້ອງຂອງຄະນະກຳມະການ ARD (ຕາມທີ່ທ່ານກຳນົດ ແລະ ໂຮງຮຽນ)

ຕ້ອງກວດເບິ່ງທຸກຂໍ້ມູນທີ່ກ່ຽວຂ້ອງໃນເອກະ ສານຂອງນັກຮຽນ, ລວມທັງ IEP ຂອງເດັກ, ການສັງເກດຄູ ແລະ ຂໍ້ມູນທີ່ກ່ຽວຂ້ອງທີ່ທ່ານໃຫ້ເພື່ອກຳນົດ:

- ຖ້າການປະພຶດທີ່ມີຄຳຖາມເກີດມາຈາກ ຫຼື ມີ ຄວາມສຳພັນໂດຍກົງ ແລະ ສຳຄັນຕໍ່ຄວາມພິ ການຂອງເດັກ ຫຼື
- ຖ້າການປະພຶດທີ່ສົງໄສເປັນຜົນໂດຍກົງຂອງໂຮງຮຽນທີ່ບໍ່ປະຕິບັດແຜນ IEP ຂອງເດັກ.

ຖ້າໂຮງຮຽນ, ທ່ານ ແລະ ສະມາຊິກທີ່ກ່ຽວຂ້ອງຂອງຄະ ນະກຳມະການ ARD ກຳນົດວ່າເງື່ອນໄຂດັ່ງກ່າວ ໄດ້ ຖືກຕອບສະໜອງ, ການປະພຶດດັ່ງກ່າວຕ້ອງໄດ້ຖືກກຳ ນົດວ່າເປັນການສະແດງອອກເຖິງຄວາມພິການຂອງເດັກ.

ຖ້າວ່າໂຮງຮຽນ, ທ່ານ ແລະ ສະມາຊິກທີ່ກ່ຽວຂ້ອງ ຂອງຄະນະກຳມະການ ARD ຂອງເດັກກຳນົດວ່າການປະພຶດທີ່ເປັນຄຳຖາມແມ່ນຜົນໄດ້ຮັບໂດຍກົງຂອງໂຮງຮຽນທີ່ບໍ່ປະຕິບັດແຜນ IEP, ໂຮງຮຽນຕ້ອງໄດ້ດຳເນີນການທັນທີເພື່ອແກ້ໄຂຂໍ້ບົກຜ່ອງເຫຼົ່ານັ້ນ. ການກຳນົດວ່າພຶດຕິກຳແມ່ນການສະແດງອອກຂອງຄວາມພິການຂອງ ເດັກ.

### ການພິຈາລະນາວ່າ ການປະພຶດເປັນການສະແດງອອກເຖິງຄວາມພິການຂອງເດັກ

ຖ້າໂຮງຮຽນ, ທ່ານ ແລະ ສະມາຊິກທີ່ກ່ຽວຂ້ອງຂອງ ຄະນະກຳມະການ ARD ຕັດສິນວ່າການປະພຶດດັ່ງກ່າວ ແມ່ນການສະແດງອອກຂອງຄວາມພິການຂອງເດັກ, ຄະ ນະກຳມະການ ARD ຕ້ອງ:

- ດຳເນີນການປະເມີນພຶດຕິກຳການເຮັດວຽກ, ເວັ້ນເສຍແຕ່ວ່າໂຮງຮຽນໄດ້ດຳເນີນການປະເມີນພຶດຕິກຳການເຮັດວຽກກ່ອນພຶດຕິກຳທີ່ເຮັດໃຫ້ມີການປ່ຽນແປງບ່ອນຮຽນ ແລະ ປະຕິບັດແຜນ ການແຊກແຊງພຶດຕິກຳສຳລັບເດັກ ຫຼື
- ຖ້າແຜນການແຊກແຊງທາງດ້ານພຶດຕິກຳໄດ້ຖືກພັດທະນາແລ້ວ, ທົບທວນແຜນການແຊກ ແຊງພຶດຕິກຳ ແລະ ດັດແປງມັນ, ຕາມຄວາມ ຈຳເປັນ, ເພື່ອແກ້ໄຂພຶດຕິກຳ.

ຍົກເວັ້ນດັ່ງທີ່ໄດ້ອະທິບາຍໄວ້ຂ້າງລຸ່ມນີ້ ພາຍໃຕ້ພາກສ່ວນສະພາບການພິເສດ, ໂຮງຮຽນຕ້ອງສົ່ງລູກທ່ານໄປບ່ອນທີ່ລູກຂອງທ່ານຖືກຍ້າຍອອກ, ເວັ້ນເສຍແຕ່ວ່າທ່ານ ແລະ ເຂດການສຶກສາຕົກລົງເຫັນດີກັບການປ່ຽນບ່ອນຮຽນທີ່ເປັນສ່ວນໜຶ່ງຂອງແຜນດັດແກ້ການປະພຶດ.

### ບັນດາສະພາບການພິເສດ

ບໍ່ວ່າພຶດຕິກຳດັ່ງກ່າວແມ່ນການສະແດງອອກເຖິງຄວາມພິການຂອງລູກທ່ານແນວໃດກໍ່ຕາມ, ພະນັກງານຂອງໂຮງຮຽນ ອາດຈະເອົານັກຮຽນໄປທີ່ IAES (ຖືກກຳນົດໂດຍຄະນະກຳມະການ ARD ຂອງເດັກ) ບໍ່ເກີນ 45 ວັນເຂົ້າຮຽນ, ຖ້າລູກຂອງທ່ານ:

- ປະກອບອາວຸດ (ເບິ່ງຄຳນິຍາມລຸ່ມນີ້) ໄປໂຮງຮຽນ ຫລື ມີອາວຸດຢູ່ໃນໂຮງຮຽນ, ໃນສະຖານທີ່ໂຮງ ຮຽນ ຫຼື ຢູ່ໃນສະຖານທີ່ເຮັດວຽກຂອງໂຮງຮຽນ ພາຍໃຕ້ອຳນາດຕັດສິນຂອງ TEA ຫຼືໂຮງຮຽນ;
- ໂດຍທີ່ຮູ້ຢ່າງແນ່ນອນວ່າມີ ຫຼື ນຳໃຊ້ຢາທີ່ຜິດກົດໝາຍ (ເບິ່ງຄຳນິຍາມຂ້າງລຸ່ມນີ້) ຫຼື ຂາຍ ຫຼື ຊັກຊວນການຂາຍສານຄວບຄຸມ, (ເບິ່ງຄຳນິຍາມຂ້າງລຸ່ມນີ້), ໃນຂະນະທີ່ຢູ່ໃນໂຮງຮຽນ, ໃນສະຖານທີ່ໂຮງຮຽນ ຫຼື ໃນໜ້າທີ່ຂອງໂຮງຮຽນພາຍ ໃຕ້ອຳນາດຕັດສິນຂອງ TEA ຫຼື ໂຮງຮຽນ ຫຼື
- ໄດ້ທຳຮ້າຍຮ່າງກາຍທີ່ຮຸນແຮງ (ເບິ່ງຄຳນິຍາມ ຂ້າງລຸ່ມນີ້) ຕໍ່ບຸກຄົນອື່ນໃນຂະນະທີ່ຢູ່ໃນໂຮງຮຽນ, ໃນສະຖານທີ່ໂຮງຮຽນ ຫຼື ໃນໜ້າທີ່ຂອງໂຮງຮຽນທີ່ຢູ່ພາຍໃຕ້ອຳນາດຕັດສິນຂອງ TEA ຫຼື ໂຮງຮຽນ.

### ຄຳນິຍາມ

ສານຄວບຄຸມ ໝາຍເຖິງຢາເສບຕິດ ຫຼື ສານເສບຕິດ ອື່ນໆ ທີ່ຖືກລະບຸໃນຕາຕະລາງ I, II, III, IV, ຫຼື V ໃນຂໍ້ 202 (c) ຂອງກົດໝາຍວ່າດ້ວຍສານຄວບຄຸມ (21 U.S.C. 812 (c)).

ຢາທີ່ຜິດກົດໝາຍ ໝາຍເຖິງ ສານເສບຕິດທີ່ຄວບຄຸມແຕ່ບໍ່ໄດ້ລວມເອົາສານຄວບຄຸມທີ່ຖືກຄອບຄອງ ຫຼື ນຳໃຊ້ຢ່າງຖືກຕ້ອງພາຍໃຕ້ການຄວບຄຸມຂອງຜູ້ຊ່ຽວຊານດ້ານສຸຂະພາບທີ່ໄດ້ຮັບອະນຸຍາດ ຫຼື ທີ່ຖືກຄອບຄອງ ຫຼື ນຳໃຊ້ຢ່າງຖືກຕ້ອງຕາມກົດໝາຍພາຍໃຕ້ອຳນາດການປົກຄອງອື່ນໆພາຍໃຕ້ກົດໝາຍນັ້ນ ຫຼື ພາຍໃຕ້ການກຳນົດອື່ນໆ ຂອງກົດໝາຍລັດຖະບານກາງ.

ການບາດເຈັບທາງຮ່າງກາຍທີ່ຮ້າຍແຮງ ມີຄວາມໝາຍໃຫ້ຄຳວ່າ ການບາດເຈັບທາງຮ່າງກາຍທີ່ຮ້າຍແຮງພາຍໃຕ້ ວັກ (3) ຂອງພາກຍ່ອຍ (h) ຂອງພາກ 1365 ຂອງຫົວຂໍ້ 18, ຂໍ້ກຳນົດຂອງສະຫະລັດອາເມລິກາ.

ອາວຸດ ໝາຍເຖິງ ອາວຸດທີ່ເປັນອັນຕະລາຍ ພາຍໃຕ້ວັກ (2) ຂອງຫົວຂໍ້ຍ່ອຍທຳອິດ (g) ຂອງພາກ 930 ຂອງຫົວຂໍ້ທີ 18, ຂໍ້ກຳນົດຂອງສະຫະລັດອາເມລິກາ.

## ແຈ້ງການ

ໃນວັນທີທີ່ມັນເຮັດໃຫ້ການຕັດສິນໃຈໃນການໂຍກຍ້າຍທີ່ເປັນການປ່ຽນແປງການບັນຈຸເຂົ້າຮຽນຂອງລູກທ່ານຍ້ອນການລະເມີດຂໍ້ກຳນົດການປະພຶດຂອງນັກຮຽນ, ໂຮງຮຽນ ເຂດຕ້ອງແຈ້ງໃຫ້ທ່ານຊາບກ່ຽວກັບການຕັດສິນໃຈນັ້ນ ແລະ ໃຫ້ແຈ້ງການກ່ຽວກັບການປົກປ້ອງຄຸ້ມຄອງໃຫ້ທ່ານ.

### ການປ່ຽນແປງສະຖານທີ່ເນື່ອງຈາກການໂຍກຍ້າຍທາງວິໄນ

ການໂຍກຍ້າຍລູກຂອງທ່ານທີ່ມີຄວາມພິການອອກຈາກການເຂົ້າຮຽນໃນປະຈຸບັນຂອງລູກທ່ານແມ່ນການປ່ຽນບ່ອນຮຽນຖ້າ:

- ການໂຍກຍ້າຍແມ່ນແກ່ຍາວກວ່າ 10 ວັນເຂົ້າ ຮຽນຕິດຕໍ່ກັນ ຫຼື
- ລູກຂອງທ່ານໄດ້ຖືກໂຍກຍ້າຍອອກຫຼາຍໆຊຸດທີ່ປະກອບເປັນແບບຢ່າງເພາະວ່າ:
    - ໄລຍະການໂຍກຍ້າຍລວມທັງໝົດຫຼາຍກ່ວາ 10 ວັນເຂົ້າຮຽນໃນສົກຮຽນ;
    - ພຶດຕິກຳຂອງລູກທ່ານມີຄວາມຄ້າຍຄືກັນກັບພຶດຕິກຳຂອງເດັກໃນເຫດການທີ່ເກີດຂຶ້ນກ່ອນໜ້ານີ້ ເຊິ່ງເປັນຜົນມາຈາກການໂຍກຍ້າຍຫຼາຍໆຄັ້ງ ແລະ
    - ມີປັດໃຈເພີ່ມເຕີມດັ່ງກ່າວເປັນໄລຍະເວລາຂອງການໂຍກຍ້າຍແຕ່ລະຄັ້ງ, ຈຳນວນເວລາທັງໝົດຂອງລູກທ່ານໄດ້ຖືກຍ້າຍອອກ ແລະ ຄວາມໃກ້ຄຽງຂອງການໂຍກຍ້າຍຕໍ່ກັນ ແລະ ກັນ.

ບໍ່ວ່າຮູບແບບຂອງການໂຍກຍ້າຍແມ່ນປະກອບມີການປ່ຽນແປງການບັນຈຸເຂົ້າຮຽນໄດ້ຖືກກຳນົດບົນພື້ນຖານກໍລະນີ-ຕໍ່-ກໍລະນີໂດຍໂຮງຮຽນ ແລະ ຖ້າມີການທ້າທາຍ, ແມ່ນຂຶ້ນກັບການທົບທວນຄືນຜ່ານຂະບວນການທີ່ກຳນົດ ແລະ ການດຳເນີນຄະດີຕາມກົດໝາຍ.

### ການກຳນົດທີ່ຕັ້ງ

ຄະນະກຳມະການ ARD ກຳນົດ IAES ສຳລັບການໂຍກຍ້າຍທີ່ເປັນການປ່ຽນແປງການຈັດຕຳແໜ່ງ ແລະ ການໂຍກຍ້າຍໃນພາກສ່ວນເພີ່ມເຕີມຂອງອີງການປົກ ຄອງ ແລະ ສະຖານະການພິເສດ.

### ການອຸທອນ

## ທົ່ວໄປ

ທ່ານສາມາດຍື່ນຄຳຮ້ອງທຸກຕາມຂະບວນການທີ່ໄດ້ກຳນົດເພື່ອຮ້ອງຂໍການໄຕ່ສວນຕາມຂະບວນການຖ້າທ່ານບໍ່ເຫັນດີນຳ:

- ການຕັດສິນໃຈໃດໆກ່ຽວກັບການບັນຈຸເຂົ້າຮຽນພາຍໃຕ້ຂໍ້ກຳນົດດ້ານລະບຽບວິໄນເຫຼົ່ານີ້ ຫຼື
- ການກຳນົດການສະແດງອອກທີ່ໄດ້ອະທິບາຍ ຂ້າງເທິງ.

ທາງໂຮງຮຽນສາມາດຍື່ນຄຳຮ້ອງທຸກຕາມຂະບວນການທີ່ກຳນົດເພື່ອຮ້ອງຂໍການໄຕ່ສວນຕາມຂະບວນການ ຖ້າ ຫາກເຊື່ອວ່າການຮັກສາການບັນຈຸເຂົ້າຮຽນຂອງລູກທ່ານໃນປະຈຸບັນອາດຈະເປັນຜົນກະທົບຕໍ່ລູກທ່ານ ຫຼື ຄົນ ອື່ນ.

### ເຈົ້າໜ້າທີ່ໃນການໄຕ່ສວນຄະດີທີ່ມີອຳນາດ

ເຈົ້າໜ້າທີ່ພິຈາລະນາຄະດີທີ່ຕອບສະໜອງຄວາມຮຽກຮ້ອງຕ້ອງການທີ່ໄດ້ອະທິບາຍໄວ້ໃນພາກກ່ຽວກັບຂັ້ນຕອນການດຳເນີນຄະດີຕາມຂັ້ນຕອນຂ້າງລຸ່ມນີ້ຕ້ອງດຳເນີນການໄຕ່ສວນຕາມຂະບວນການ ແລະ ຕັດສິນໃຈ. ເຈົ້າໜ້າທີ່ໄຕ່ສວນອາດຈະ:

- ສົ່ງຄືນລູກຂອງທ່ານທີ່ມີຄວາມພິການໄປທີ່ບ່ອນທີ່ລູກຂອງທ່ານຖືກຍ້າຍອອກ ຖ້າເຈົ້າໜ້າທີ່ພິຈາລະນາຕັດສິນວ່າການໂຍກຍ້າຍແມ່ນການລະເມີດຂໍ້ກຳນົດທີ່ອະທິບາຍພາຍໃຕ້ຫົວຂໍ້ອຳນາດການປົກຄອງຂອງພະນັກງານໂຮງຮຽ ຫຼື ວ່າພຶດຕິກຳຂອງລູກທ່ານແມ່ນການສະແດງອອກຂອງຄວາມພິການຂອງລູກທ່ານ ຫຼື
- ສັ່ງການປ່ຽນບ່ອນຮຽນຂອງລູກທ່ານທີ່ມີຄວາມພິການໃຫ້ເປັນ IAES ທີ່ເໝາະສົມບໍ່ເກີນ 45 ວັນເຂົ້າຮຽນຖ້າເຈົ້າໜ້າທີ່ພິຈາລະນາຕັດສິນວ່າການຮັກສາການບັນຈຸເຂົ້າຮຽນຂອງລູກທ່ານໃນປັດຈຸບັນແມ່ນມີຜົນກະທົບຕໍ່ລູກທ່ານ ຫຼື ຄົນອື່ນ.

ຂັ້ນຕອນການໄຕ່ສວນເຫຼົ່ານີ້ອາດຈະຖືກເຮັດຊ້ຳອີກ, ຖ້າວ່າໂຮງຮຽນເຊື່ອວ່າການສົ່ງລູກຂອງທ່ານໄປຢູ່ບ່ອນເດີມແມ່ນຈະມີຜົນກະທົບຕໍ່ລູກທ່ານ ຫຼື ຄົນອື່ນ.

ເມື່ອໃດກໍຕາມທີ່ທ່ານ ຫຼື ໂຮງຮຽນຍື່ນຄໍາຮ້ອງທຸກຕາມຂະບວນການເພື່ອຮ້ອງຂໍການໄກ່ສ່ວນດັ່ງກ່າວ, ຕ້ອງມີການພິຈາລະນາຄະດີທີ່ສອດຄ່ອງກັບຂໍ້ກໍານົດທີ່ໄດ້ອະທິບາຍໄວ້ໃນພາກກ່ຽວກັບຂັ້ນຕອນການດໍາເນີນຄະດີຕາມຂໍ້ກໍານົດ ຂ້າງລຸ່ມນີ້, ຍົກເວັ້ນດັ່ງຕໍ່ໄປນີ້:

- TEA ຫຼື ໂຮງຮຽນຕ້ອງໄດ້ຈັດແຈງໃຫ້ມີການໄກ່ສ່ວນຕາມຂະບວນການຢ່າງວ່ອງໄວ, ເຊິ່ງຈະຕ້ອງເກີດຂຶ້ນພາຍໃນ 20 ວັນເຂົ້າຮຽນນັບແຕ່ວັນທີ່ໄດ້ມີການຮ້ອງຂໍການໄກ່ສ່ວນ ແລະ ຕ້ອງມີການຕັດສິນພາຍໃນ 10 ວັນເຂົ້າຮຽນຫຼັງຈາກໄດ້ຮັບການໄກ່ສ່ວນ.
- ເວັ້ນເສຍແຕ່ວ່າທ່ານ ແລະ ໂຮງຮຽນຈະເຫັນດີເປັນລາຍລັກອັກສອນເພື່ອຍົກເວັ້ນການປະຊຸມ ຫຼື ເຫັນດີນໍາໃຊ້ການໄກ່ເກ່ຍ, ການປະຊຸມການແກ້ໄຂຕ້ອງມີຂຶ້ນພາຍໃນເຈັດວັນຕາມເວລາປະຕິທິນ ນັບຈາກໄດ້ຮັບແຈ້ງການຂອງການຮ້ອງທຸກຕາມຂະບວນການ. ການໄກ່ສ່ວນສາມາດດໍາເນີນການໄດ້ ເວັ້ນເສຍແຕ່ວ່າບັນຫາດັ່ງກ່າວໄດ້ຖືກແກ້ໄຂ ເພື່ອຄວາມພໍໃຈຂອງທັງສອງຝ່າຍພາຍໃນ 15 ວັນຕາມເວລາປະຕິທິນນັບແຕ່ໄດ້ຮັບຄໍາຮ້ອງທຸກຕາມຂະບວນການ
- ລັດໃດໜຶ່ງອາດຈະສ້າງກົດລະບຽບດ້ານວິທີການທີ່ແຕກຕ່າງກັນສໍາລັບການໄກ່ສ່ວນຕາມຂະບວນການຢ່າງໄວວາທ່າວມັນໄດ້ສ້າງຕັ້ງຂຶ້ນສໍາລັບການໄກ່ສ່ວນຕາມຂະບວນການອື່ນໆ, ແຕ່ຍົກເວັ້ນ ເວລາກໍານົດ, ກົດລະບຽບເຫຼົ່ານັ້ນ ຕ້ອງສອດຄ່ອງກັບກົດລະບຽບໃນເອກະສານນີ້ກ່ຽວກັບການໄກ່ສ່ວນຕາມຂະບວນການ.

ທ່ານ ຫຼື ໂຮງຮຽນສາມາດອຸທອນຄໍາຕັດສິນດັ່ງກ່າວໃນການໄກ່ສ່ວນຕາມຂະບວນການຢ່າງໄວວາໃນລັກສະນະດຽວກັນກັບການຕັດສິນໃນການໄກ່ສ່ວນຕາມຂະບວນການອື່ນໆ, ດັ່ງທີ່ໄດ້ອະທິບາຍໄວ້ໃນພາກກ່ຽວກັບການດໍາເນີນຄະດີແພ່ງ, ຂ້າງລຸ່ມນີ້.

### ການບັນຈຸເຂົ້າຮຽນໃນລະຫວ່າງການອຸທອນ

ດັ່ງທີ່ໄດ້ອະທິບາຍຂ້າງເທິງ, ເມື່ອທ່ານ ຫຼື ໂຮງຮຽນຍື່ນຄໍາຮ້ອງທຸກຕາມຫຼັກການທີ່ກ່ຽວຂ້ອງກັບເລື່ອງລະບຽບວິໄນ, ລູກຂອງທ່ານຕ້ອງ (ເວັ້ນເສຍແຕ່ວ່າທ່ານ ແລະ TEA ຫຼື ໂຮງຮຽນຕົກລົງເຫັນດີຖ້າບໍ່ດັ່ງນັ້ນ) ຍັງຄົງຢູ່ໃນ IAES ໂດຍລໍຖ້າການຕັດສິນຂອງເຈົ້າໜ້າທີ່ໄກ່ສ່ວນ ຫຼື ຈົນກ່ວາໝົດອາຍຸຂອງໄລຍະເວລາຂອງການໂຍກຍ້າຍຕາມທີ່ອະທິບາຍໄວ້ ແລະ ອະທິບາຍພາຍໃຕ້ຫົວຂໍ້ສິດອໍານາດຂອງພະນັກງານໂຮງຮຽນ, ແລ້ວແຕ່ວ່າອັນໃດຈະເກີດຂຶ້ນກ່ອນ.

### ການປົກປ້ອງເດັກຍັງບໍ່ມີສິດສໍາລັບການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງ

## ໂດຍທົ່ວໄປ

ຖ້າລູກຂອງທ່ານຍັງບໍ່ທັນໄດ້ຮັບການກໍານົດວ່າມີສິດໄດ້ຮັບການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງ ແລະ ລະເມີດຂໍ້ກໍານົດຂອງການປະພຶດຂອງນັກຮຽນ, ແຕ່ວ່າໂຮງຮຽນມີຄວາມຮູ້ (ຕາມທີ່ໄດ້ກໍານົດໄວ້ຂ້າງລຸ່ມ) ກ່ອນພຶດຕິກໍາທີ່ນໍາໄປສູ່ການປະຕິບັດວິໄນຄວາມພິການ, ຫຼັງຈາກນັ້ນລູກຂອງທ່ານອາດຈະຮັບປະກັນການປົກປ້ອງໃດໆທີ່ໄດ້ອະທິບາຍໄວ້ໃນແຈ້ງການນີ້.

### ພື້ນຖານຂອງຄວາມຮູ້ສໍາລັບເລື່ອງລະບຽບວິໄນ

ໂຮງຮຽນ ຈະຖືກຖືວ່າມີຄວາມຮູ້ວ່າລູກຂອງທ່ານແມ່ນເດັກພິການ ຖ້າວ່າກ່ອນການປະພຶດທີ່ເກີດຂຶ້ນກັບການປະຕິບັດວິໄນໄດ້ເກີດຂຶ້ນ:

- ທ່ານໄດ້ສະແດງຄວາມເປັນຫ່ວງເປັນລາຍລັກອັກສອນໃຫ້ກັບຫົວໜ້າຄຸມງານ ຫຼື ພະນັກງານບໍລິຫານຂອງອົງການການສຶກສາ ທີ່ເໝາະສົມ, ຫຼື ຕໍ່ຄູອາຈານຂອງລູກທ່ານວ່າລູກທ່ານຕ້ອງການການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງ;
- ທ່ານໄດ້ຮຽກຮ້ອງໃຫ້ມີການປະເມີນຜົນທີ່ກ່ຽວຂ້ອງກັບການມີສິດໄດ້ຮັບການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງພາຍໃຕ້ IDEA ພາກ B ຫຼື
- ຄູອາຈານຂອງລູກທ່ານ ຫຼື ພະນັກງານຄົນອື່ນໆໃນໂຮງຮຽນໄດ້ສະແດງຄວາມກັງວົນສະເພາະກ່ຽວກັບຮູບແບບການປະພຶດທີ່ລູກຂອງທ່ານສະແດງໂດຍກົງກັບຜູ້ອໍານວຍການໂຮງຮຽນສຶກສາພິເສດ ຫຼື ຕໍ່ກັບພະນັກງານຄວບຄຸມອື່ນໆຂອງໂຮງຮຽນ.

*ຂໍ້ຍົກເວັ້ນ* - ໂຮງຮຽນຈະບໍ່ຖືວ່າມີຄວາມຮູ້ດັ່ງກ່າວຖ້າ:

- ທ່ານບໍ່ໄດ້ອະນຸຍາດໃຫ້ມີການປະເມີນຜົນຂອງລູກທ່ານ ຫຼື ປະຕິເສດການບໍລິການດ້ານການສຶກສາ ພິເສດ ຫຼື
- ລູກຂອງທ່ານໄດ້ຖືກປະເມີນຜົນ ແລະ ກໍານົດວ່າ ບໍ່ແມ່ນເດັກພິການພາຍໃຕ້ IDEA ພາກ B.

### ເງື່ອນໄຂຕ່າງໆທີ່ນໍາໃຊ້ໄດ້ຖ້າບໍ່ມີພື້ນຖານຄວາມຮູ້

ຖ້າກ່ອນທີ່ຈະປະຕິບັດມາດຕະການທາງວິໄນຕໍ່ລູກຂອງ ທ່ານ, ໂຮງຮຽນບໍ່ມີຄວາມຮູ້ວ່າລູກຂອງທ່ານແມ່ນ ເດັກ ພິການດັ່ງທີ່ໄດ້ອະທິບາຍໄວ້ຂ້າງເທິງໃນພື້ນຖານຂອງ ຄວາມຮູ້ດ້ານວິໄນ ແລະ ຂໍ້ຍົກເວັ້ນ, ລູກຂອງທ່ານອາດ ຈະຖືກປະຕິບັດມາດຕະການທາງວິໄນທີ່ຖືກນໍາໃຊ້ເດັກ ນ້ອຍທີ່ບໍ່ມີຄວາມພິການເຊິ່ງມີພຶດຕິກໍາທີ່ປຽບທຽບໄດ້. ເຖິງຢ່າງໃດກໍຕາມ, ຖ້າມີການຮ້ອງຂໍໃຫ້ມີການປະເມີນຜົນຂອງລູກທ່ານໃນໄລຍະເວລາທີ່ລູກຂ ອງທ່ານຖືກປະຕິບັດມາດຕະການທາງວິໄນ, ການປະເມີນຜົນຕ້ອງໄດ້ດໍາເນີນຢ່າງວ່ອງໄວ. ຈົນກ່ວາການປະເມີນຜົນສໍາເລັດ, ລູກຂອງທ່ານຈະຢູ່ໃນສະຖານທີ່ການສຶກສາທີ່ກໍານົດໂດຍອໍານາດການປົກຄ ອງໂຮງຮຽນ, ເຊິ່ງສາມາດປະກອບມີການຢຸດ ຫຼື ການໄລ່ອອກໂດຍບໍ່ມີການບໍລິການດ້ານການສຶກສາ. ຖ້າລູກທ່ານຖືກພິຈາລະນາເປັນເດັກພິການໂດຍພິຈາລະນາຂໍ້ມູນຈາກການປ ະເມີນຜົນທີ່ທາງໂຮງຮຽນ ແລະ ຂໍ້ມູນ ໄດ້ສະໜອງໂດຍທ່ານ, ທາງໂຮງຮຽນຕ້ອງໃຫ້ການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງສອດຄ່ອງກັບ IDEA ພາກ B, ລວມທັງຂໍ້ກໍານົດດ້ານວິໄນອະທິບາຍ ຂ້າງເທິງ.

### ການສົ່ງເຖິງ ແລະ ການດໍາເນີນການໂດຍໜ່ວຍງານບັງຄັບໃຊ້ກົດໝາຍ ແລະ ໜ່ວຍງານຕຸລາການ

IDEA ພາກ B ບໍ່:

- ຫ້າມອົງການໜຶ່ງຈາກການລາຍງານການກະທໍາຜິດທີ່ເດັກພິການໃຫ້ກັບເຈົ້າໜ້າທີ່ທີ່ເໝາະສົມໃດໜຶ່ງ ຫຼື
- ປ້ອງກັນການບັງຄັບໃຊ້ກົດໝາຍ ແລະ ອໍານາດຕຸລາການຈາກການໃຊ້ຄວາມຮັບຜິດຊອບຂອງພວກເຂົາກ່ຽວກັບການນໍາໃຊ້ກົດໝາຍຂອງລັດຖະບານກາງ ແລະ ລັດຕໍ່ອາຊະຍາກໍາທີ່ໄດ້ກະທໍາໂດຍເດັກພິການ.

### ການສົ່ງບັນທຶກ

ຖ້າໂຮງຮຽນໄດ້ລາຍງານຄວາມຜິດທີ່ເກີດຂຶ້ນໂດຍເດັກພິ ການ, ໂຮງຮຽນ:

- ຕ້ອງຮັບປະກັນວ່າ ສໍາເນົາເອກະສານການສຶກສາພິເສດແລະ ການປະຕິບັດວິໄນຂອງເດັກຖືກສົ່ງຕໍ່ເພື່ອພິຈາລະນາໂດຍເຈົ້າໜ້າທີ່ໃຫ້ອົງການຜູ້ທີ່ລາຍງານວ່າມີອາຊະຍາກໍາ; ແລະ
- ອາດຈະສົ່ງສໍາເນົາເອກະສານການສຶກສາພິເສດ ແລະ ການບັນທຶກການປະຕິບັດວິໄນຂອງເດັກ ເທົ່ານັ້ນ ໃນຂອບເຂດທີ່ອະນຸຍາດໂດຍສິດທິການ ສຶກສາໃນຄອບຄົວ ແລະ ກົດໝາຍວ່າດ້ວຍສິດ ທິສ່ວນຕົວ (FERPA).

## ການຮັກສາຄວາມລັບຂອງຂໍ້ມູນ

ດັ່ງທີ່ໄດ້ໃຊ້ໃນສ່ວນນີ້:

**ການທໍາລາຍ** ໝາຍເຖິງການທໍາລາຍຮ່າງກາຍ ຫຼື ການກໍາຈັດຕົວລະບຸຕົວຕົນບຸກຄົນອອກຈາກຂໍ້ມູນເພື່ອວ່າຂໍ້ມູນດັ່ງກ່າວຈະບໍ່ສາມາດກໍານົດຕົນຕົວໄດ້ອີກຕໍ່ໄປ.

**ການບັນທຶກການສຶກສາ** ໝາຍຄວາມວ່າ ເປັນປະເພດຂອງບັນທຶກທີ່ຖືກປົກຄຸມຕາມຄໍານິຍາມຂອງບັນທຶກການສຶກສາດັ່ງທີ່ໄດ້ອະທິບາຍໄວ້ໃນ 34 CFR ພາກທີ 99 (ລະບຽບການປະຕິບັດກົດໝາຍສິດທິດ້ານການສຶກສາໃນ ຄອບຄົວ ແລະ ສິທິດ້ານຄວາມເປັນສ່ວນຕົວ (FERPA) ປີ 1974, 20 ສະຫະລັດອາເມລິກາ 1232g).

**ອົງການທີ່ເຂົ້າຮ່ວມ** ໝາຍເຖິງ ເຂດການສຶກສາ, ອົງການ ຫຼື ສະຖາບັນໃດໜຶ່ງທີ່ເກັບກໍາ, ຮັກສາ ຫຼື ນໍາໃຊ້ຂໍ້ມູນທີ່ລະບຸຕົວຕົນ ຫຼື ຈາກຂໍ້ມູນທີ່ໄດ້ຮັບຈາກຂໍ້ມູນໃດໜຶ່ງ, ພາຍໃຕ້ IDEA ພາກ B.

**ຂໍ້ມູນທີ່ສາມາລະບຸຕົວຕົນສ່ວນບຸກຄົນ** ລວມມີ: ຊື່ຂອງລູກທ່ານ, ຊື່ຂອງທ່ານໃນຖານະເປັນພໍ່ແມ່ ຫຼື ຊື່ຂອງສະມາຊິກຄອບຄົວຄົນອື່ນ; ທີ່ຢູ່ຂອງລູກທ່ານ; ຕົວລະບຸຕົວຕົນຕົວ ເຊັ່ນ ເລກປະກັນສັງຄົມຂອງລູກທ່ານ ຫຼື ບັນຊີລາຍຊື່ຂອງຄຸນລັກສະນະສ່ວນບຸກຄົນ ຫຼື ຂໍ້ມູນອື່ນໆ ທີ່ຈະເຮັດໃຫ້ທ່ານສາມາດລະບຸລູກຂອງທ່ານດ້ວຍຄວາມແນ່ນອນທີ່ສົມເຫດສົມຜົນ.

ທ່ານມີສິດທີ່ຈະກວດເບິ່ງບັນທຶກການສຶກສາທັງໝົດ ຂອງລູກທ່ານ ລວມທັງພາກສ່ວນທີ່ກ່ຽວຂ້ອງກັບການສຶກ ສາພິເສດ. ທາງໂຮງຮຽນສາມາດສັນນິຖານວ່າທ່ານມີສິດອຳນາດໃນການກວດກາ ແລະ ກວດກາບັນທຶກທີ່ກ່ຽວຂ້ອງກັບລູກຂອງທ່ານ ເວັ້ນເສຍແຕ່ໄດ້ແນະນຳວ່າທ່ານບໍ່ມີສິດອຳນາດພາຍໃຕ້ກົດໝາຍຂອງລັດທີ່ມີການຄຸ້ມຄອງ ເຊັ່ນ: ການປົກຄອງ, ການແຍກ ແລະ ການຢ່າຮ້າງ. ທ່ານຍັງສາມາດອະນຸຍາດໃຫ້ຜູ້ອື່ນກວດກາບັນທຶກຂອງລູກທ່ານໄດ້. ເມື່ອທ່ານຮ້ອງຂໍໃຫ້ກວດເບິ່ງບັນທຶກ, ທາງໂຮງຮຽນຕ້ອງເຮັດໃຫ້ພວກເຂົາສາມາດໃຊ້ໄດ້ໂດຍບໍ່ມີການຊັກຊ້າທີ່ບໍ່ຈຳເປັນ ແລະ ກ່ອນການປະຊຸມໃດໆກ່ຽວກັບ IEP ຂອງລູກທ່ານ, ກ່ອນການພິຈາລະນາຄະດີ ຫຼື ການແກ້ໄຂບັນຫາ, ແລະ ບໍ່ມີກໍລະນີເກີນ 45 ວັນປະຕິທິນ ຫຼັງຈາກວັນທີຂອງການຮ້ອງຂໍ.

## ການຊີ້ແຈງ, ສຳເນົາ ແລະ ຄ່າທຳນຽມຕ່າງໆ

ຖ້າທ່ານຮ້ອງຂໍ, ໂຮງຮຽນຕ້ອງໄດ້ອະທິບາຍ ແລະ ຕີຄວາມໝາຍຂອງບັນທຶກດ້ວຍເຫດຜົນ. ໂຮງຮຽນຕ້ອງເຮັດສຳເນົາໃຫ້ທ່ານ ຖ້ານັ້ນແມ່ນວິທີດຽວທີ່ທ່ານຈະສາມາດກວດກາ ແລະ ກວດເບິ່ງບັນທຶກດັ່ງກ່າວ. ໂຮງຮຽນບໍ່ສາມາດເກັບຄ່າທຳນຽມໃນການຄົ້ນຫາ ຫຼື ເອົາບັນທຶກການສຶກສາໃດໆ ກ່ຽວກັບລູກຂອງທ່ານ. ເຖິງຢ່າງໃດກໍຕາມ, ມັນອາດຈະເກັບຄ່າທຳນຽມໃນການສຳເນົາ ຖ້າຄ່າທຳນຽມບໍ່ສາມາດຢຸດທ່ານໃຫ້ກວດກາ ແລະ ກວດກາບັນທຶກດັ່ງກ່າວໄດ້.

## ຂໍ້ມູນກ່ຽວກັບເດັກຫຼາຍກວ່າໜຶ່ງຄົນ

ຖ້າບັນທຶກການສຶກສາໃດໆລວມມີຂໍ້ມູນກ່ຽວກັບເດັກຫຼາຍາຍກວ່າໜຶ່ງຄົນ, ທ່ານມີສິດທີ່ຈະກວດກາ ແລະ ທົບທວນພຽງແຕ່ຂໍ້ມູນທີ່ກ່ຽວຂ້ອງກັບລູກຂອງທ່ານ ຫຼື ໄດ້ຮັບການແຈ້ງໃຫ້ຊາບກ່ຽວກັບຂໍ້ມູນສະເພາະນັ້ນ.

ທ່ານມີສິດທີ່ຈະຮ້ອງຂໍ ແລະ ໄດ້ຮັບລາຍການຂອງປະເພດ ແລະ ສະຖານທີ່ຂອງບັນທຶກການສຶກສາທີ່ເກັບກຳໄດ້, ຮັກສາ ຫຼື ນຳໃຊ້ໂດຍໂຮງຮຽນ.

## ການເຫັນດີເຫັນພ້ອມສຳລັບການເປີດເຜີຍຂໍ້ມູນທີ່ມີການລະບຸຕົວຕົນສ່ວນບຸກຄົນ

ເວັ້ນເສຍແຕ່ວ່າຂໍ້ມູນຈະຖືກບັນຈຸຢູ່ໃນບັນທຶກການສຶກສາ ແລະ ການເປີດເຜີຍໄດ້ຖືກອະນຸຍາດໂດຍບໍ່ໄດ້ຮັບການຍິນຍອມຈາກຜູ້ປົກຄອງພາຍໃຕ້ FERPA, ການຍິນຍອມຂອງທ່ານຕ້ອງໄດ້ຮັບກ່ອນທີ່ຂໍ້ມູນສ່ວນຕົວຈະຖືກເປີດເຜີຍຕໍ່ພາກສ່ວນອື່ນນອກເໜືອຈາກເຈົ້າໜ້າທີ່ຂອງໜ່ວຍງານທີ່ເຂົ້າຮ່ວມ. ການຍິນຍອມເຫັນດີຂອງທ່ານແມ່ນບໍ່ຈຳເປັນ ກ່ອນທີ່ຂໍ້ມູນສ່ວນຕົວຈະຖືກເປີດເຜີຍຕໍ່ເຈົ້າໜ້າທີ່ຂອງໜ່ວຍງານທີ່ເຂົ້າຮ່ວມເພື່ອຈຸດປະສົງເພື່ອຕອບສະໜອງຄວາມຕ້ອງການຂອງ IDEA ພາກ B. ການຍິນຍອມເຫັນດີຂອງທ່ານ ຫຼື ການຍິນຍອມຂອງເດັກທີ່ມີເງື່ອນໄຂທີ່ມີອາຍຸເຖິງກຳນົດພາຍໃຕ້ກົດໝາຍ ຂອງລັດ, ຕ້ອງໄດ້ຮັບກ່ອນທີ່ຂໍ້ມູນທີ່ລະບຸຕົວສ່ວນຕົວຈະຖືກເຜີຍແຜ່ໃຫ້ເຈົ້າໜ້າທີ່ຂອງໜ່ວຍງານທີ່ເຂົ້າຮ່ວມສະໜອງ ຫຼື ຈ່າຍຄ່າບໍລິການໃນການຫັນປ່ຽນ.

ຖ້າລູກຂອງທ່ານລົງທະບຽນ ຫຼື ກຳລັງຈະເຂົ້າໂຮງຮຽນ, ໃນໂຮງຮຽນເອກະຊົນທີ່ບໍ່ຕັ້ງຢູ່ໃນໂຮງຮຽນດຽວກັນບ່ອນທີ່ທ່ານອາໄສຢູ່, ການຍິນຍອມຂອງທ່ານຕ້ອງໄດ້ຮັບກ່ອນທີ່ຈະມີຂໍ້ມູນທີ່ລະບຸຕົວຕົນສ່ວນຕົວກ່ຽວກັບລູກຂອງທ່ານຖືກປ່ອຍອອກລະຫວ່າງເຈົ້າໜ້າທີ່ໃນເຂດໂຮງຮຽນ. ບ່ອນທີ່ໂຮງຮຽນເອກະຊົນຕັ້ງຢູ່ ແລະ ເຈົ້າໜ້າທີ່ໃນເຂດໂຮງຮຽນ ບ່ອນທີ່ທ່ານອາໄສຢູ່.

ໂຮງຮຽນຕ້ອງເກັບຮັກສາບັນທຶກຂອງທຸກຄົນ ຍົກເວັ້ນທ່ານ ແລະ ເຈົ້າໜ້າທີ່ໂຮງຮຽນທີ່ໄດ້ຮັບອະນຸຍາດ, ຜູ້ທີ່ກວດກາບັນທຶກການສຶກສາພິເສດຂອງລູກທ່ານ, ເວັ້ນເສຍແຕ່ວ່າທ່ານໄດ້ໃຫ້ການຍິນຍອມໃຫ້ເປີດເຜີຍໄດ້ເທົ່ານັ້ນ. ບັນທຶກນີ້ຕ້ອງປະກອບມີຊື່ຂອງບຸກຄົນ, ການເຂົ້າເຖິງວັນທີ ແລະ ຈຸດປະສົງທີ່ບຸກຄົນດັ່ງກ່າວໄດ້ຮັບອະນຸຍາດໃຫ້ນຳໃຊ້ບັນທຶກດັ່ງກ່າວ.

ເຈົ້າໜ້າທີ່ໜຶ່ງຄົນໃນໂຮງຮຽນຕ້ອງຮັບຜິດຊອບໃນການຮັບປະກັນຄວາມລັບຂອງຂໍ້ມູນທີ່ເປັນຕົວຕົນໃດໆ. ທຸກໆຄົນທີ່ລວບລວມ ຫຼື ນຳໃຊ້ຂໍ້ມູນທີ່ລະບຸຕົວຕົນສ່ວນບຸກຄົນ ຕ້ອງໄດ້ຮັບການຝຶກອົບຮົມ ຫຼື ຄຳແນະນຳກ່ຽວກັບນະໂຍບາຍ ແລະ ຂັ້ນຕອນຕ່າງໆຂອງລັດກ່ຽວກັບຄວາມລັບ ພາຍໃຕ້ IDEA ແລະ FERPA. ແຕ່ລະໂຮງຮຽນຕ້ອງຮັກສາລາຍຊື່ ແລະ ຕຳແໜ່ງຂອງພະນັກງານຜູ້ທີ່ຢູ່ໃນໂຮງຮຽນເຊິ່ງປັດຈຸບັນສາມາດເຂົ້າເຖິງຂໍ້ມູນທີ່ສາມາດລະບຸຕົນເອງໄດ້ ສຳລັບການກວດກາສາທາລະນະ.

## ການດັດແກ້ບັນທຶກ

ຖ້າທ່ານເຊື່ອວ່າ ບັນທຶກການສຶກສາ ຂອງລູກທ່ານບໍ່ຖືກຕ້ອງ, ເຂົ້າໃຈຜິດ ຫຼື ລະເມີດສິດທິຂອງລູກທ່ານ,

ທ່ານອາດຈະຂໍໃຫ້ໂຮງຮຽນດັດແກ້ຂໍ້ມູນດັ່ງກ່າວ. ພາຍໃນເວລາທີ່ເໝາະສົມ, ໂຮງຮຽນຕ້ອງຕັດສິນໃຈວ່າຈະ ປັບປ່ຽນຂໍ້ມູນ ຫຼື ບໍ່. ຖ້າໂຮງຮຽນປະຕິເສດການແກ້ໄຂຂໍ້ມູນດັ່ງທີ່ໄດ້ຮຽກຮ້ອງ, ຕ້ອງແຈ້ງໃຫ້ທ່ານຊາບເຖິງການປະຕິເສດ ແລະ ຊາບເຖິງສິດທິຂອງທ່ານໃນການໄຕ່ສວນເພື່ອທ້າທາຍຂໍ້ມູນໃນບັນທຶກ. ການໄຕ່ສວນປະເພດນີ້ແມ່ນການໄຕ່ສວນໃນທ້ອງຖິ່ນພາຍໃຕ້ FERPA ແລະ ບໍ່ແມ່ນການໄຕ່ສວນຕາມຂະບວນການຂອງ IDEA ທີ່ຈັດຂຶ້ນຕໍ່ໜ້າເຈົ້າໜ້າທີ່ພິຈາລະນາຍຸຕິທຳ.

ອີງຕາມຜົນມາຈາກການໄຕ່ສວນ, ຖ້າວ່າໂຮງຮຽນຕັດສິນວ່າຂໍ້ມູນດັ່ງກ່າວແມ່ນບໍ່ຖືກຕ້ອງ, ເຂົ້າໃຈຜິດ ຫຼື ບໍ່ດັ່ງນັ້ນເປັນການລະເມີດຄວາມເປັນສ່ວນຕົວ ຫຼື ສິດອື່ນໆຂອງລູກທ່ານ, ຕ້ອງໄດ້ປ່ຽນແປງຂໍ້ມູນ ແລະ ແຈ້ງເປັນລາຍລັກອັກສອນ. ຖ້າວ່າຈາກການໄຕ່ສວນ, ທາງໂຮງຮຽນຕັດສິນວ່າຂໍ້ມູນນັ້ນບໍ່ແມ່ນບໍ່ຖືກຕ້ອງ, ບໍ່ຜິດພາດ ຫຼື ບໍ່ມີການລະ ເມີດສິດທິສ່ວນຕົວ ຫຼື ສິດອື່ນໆຂອງລູກທ່ານ, ທ່ານຕ້ອງໄດ້ຮັບການແຈ້ງບອກສິດຂອງທ່ານໃນການວາງຄຳເຫັນໃສ່ຂໍ້ມູນໃນບັນທຶກຂອງລູກທ່ານເປັນເວລາດົນເທົ່າທີ່ສ່ວນຂອງບົດບັນທຶກ ຫຼື ຂໍ້ຂັດແຍ່ງຈະຖືກຮັກສາໄວ້ໂດຍໂຮງຮຽນ.

ຖ້າທ່ານຖອນຄືນການຍິນຍອມຂອງທ່ານເປັນລາຍລັກອັກສອນສຳລັບການໄດ້ຮັບການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງຂອງລູກທ່ານຫຼັງຈາກໂຮງຮຽນໄດ້ໃຫ້ບໍລິການແກ່ລູກທ່ານ, ໂຮງຮຽນບໍ່ຈຳເປັນຕ້ອງດັດແກ້ເອກະສານການສຶກສາຂອງລູກທ່ານ ແລະ ການບໍລິການທີ່ກ່ຽວຂ້ອງ. ເຖິງຢ່າງໃດກໍຕາມ, ທ່ານຍັງມີສິດທີ່ຈະຂໍໃຫ້ໂຮງຮຽນດັດແກ້ບັນທຶກຂອງລູກທ່ານ ຖ້າທ່ານເຊື່ອວ່າບັນທຶກດັ່ງກ່າວບໍ່ຖືກຕ້ອງ, ເຂົ້າໃຈຜິດ ຫຼື ລະເມີດສິດທິຂອງລູກທ່ານ.

**ການປ້ອງກັນ ແລະ ການທຳລາຍ**

ໂຮງຮຽນຕ້ອງປົກປ້ອງຄວາມລັບຂອງບັນທຶກຂອງລູກທ່ານໃນເວລາເກັບກຳ, ເກັບຮັກສາ, ເປີດເຜີຍ ແລະ ຂັ້ນຕອນການທຳລາຍ. ການທຳລາຍ ໝາຍເຖິງການທຳລາຍທາງກາຍຍະພາບ ຫຼື ການກຳຈັດຕົວລະບຸຕົວຕົນຂອງບຸກຄົນອອກຈາກຂໍ້ມູນ ເພື່ອວ່າຂໍ້ມູນດັ່ງກ່າວຈະບໍ່ສາມາດກຳນົດຕົນຕົວໄດ້ອີກຕໍ່ໄປ. ໂຮງຮຽນຕ້ອງແຈ້ງໃຫ້ທ່ານຊາບ ເມື່ອຂໍ້ມູນໃນບັນທຶກຂອງລູກທ່ານບໍ່ຈຳເປັນຕ້ອງໃຫ້ການບໍລິການດ້ານການສຶກສາແກ່ລູກຂອງທ່ານອີກຕໍ່ໄປ.

ຂໍ້ມູນຕ້ອງຖືກທຳລາຍຕາມຄຳຮ້ອງຂໍຂອງທ່ານຍົກເວັ້ນແຕ່ຊື່, ທີ່ຢູ່, ເບີໂທລະສັບ, ຊັ້ນຮຽນ, ບັນທຶກການເຂົ້າຮຽນ, ຊັ້ນຮຽນທີ່ເຂົ້າຮ່ວມ, ລະດັບຊັ້ນຮຽນ ແລະ ປີສຳເລັດ.

**ແຈ້ງການເຖິງພໍ່ແມ່**

TEA ຈະແຈ້ງໃຫ້ຊາບວ່າພຽງພໍທີ່ຈະແຈ້ງໃຫ້ພໍ່ແມ່ຊາບກ່ຽວກັບຄວາມລັບຂອງຂໍ້ມູນທີ່ເປັນຕົວລະບຸຕົວຕົນຂອງ ບຸກຄົນ, ລວມທັງ: ລາຍລະອຽດກ່ຽວກັບຂອບເຂດທີ່ແຈ້ງການດັ່ງກ່າວໄດ້ຖືກແຈ້ງອອກເປັນພາສາພື້ນເມືອງຂອງກຸ່ມປະຊາກອນຕ່າງໆໃນລັດ; ຄຳອະທິບາຍກ່ຽວກັບເດັກນ້ອຍທີ່ມີຂໍ້ມູນທີ່ສາມາດກຳນົດຕົນຕົວສ່ວນບຸກຄົນ, ປະເພດຂໍ້ມູນທີ່ຕ້ອງການຊອກຫາ, ວິທີການທີ່ຈະໃຊ້ໃນການ ເກັບກຳຂໍ້ມູນ, ລວມທັງແຫຼ່ງທີ່ມາຈາກຜູ້ທີ່ເກັບກຳຂໍ້ມູນ ແລະ ການນຳໃຊ້ຂໍ້ມູນຕ່າງໆ; ບົດສະຫຼຸບຂອງນະໂຍບາຍ ແລະ ຂັ້ນຕອນຕ່າງໆທີ່ອົງການທີ່ເຂົ້າຮ່ວມຕ້ອງປະຕິບັດຕາມການເກັບຮັກສາ, ການເປີດເຜີຍຕໍ່ບຸກຄົນທີສາມ, ການຮັກສາແລະການທຳລາຍຂໍ້ມູນທີ່ລະບຸຕົວຕົນເອງ ແລະ ລາຍລະອຽດກ່ຽວກັບສິດທັງໝົດຂອງພໍ່ແມ່ ແລະ ເດັກນ້ອຍກ່ຽວກັບຂໍ້ມູນນີ້, ລວມທັງສິດທິພາຍໃຕ້ກົດໝາຍ FERPA ແລະ ລະບຽບການຈັດຕັ້ງປະຕິບັດໃນ 34 CFR ພາກ 99.

## ສະຖານທີ່ໂຮງຮຽນເອກະຊົນແບບສະໝັກໃຈໂດຍພໍ່ແມ່

ທ່ານມີສິດສະເພາະໃນເວລາທີ່ທ່ານສະໝັກໃຈລູກຂອງທ່ານເຂົ້າໂຮງຮຽນເອກະຊົນ. IDEA ບໍ່ໄດ້ຮຽກຮ້ອງໃຫ້ໂຮງຮຽນສາທາລະນະຈ່າຍຄ່າຮຽນ, ລວມທັງການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງ, ສຳລັບລູກຂອງທ່ານທີ່ມີຄວາມພິການຢູ່ໂຮງຮຽນເອກະຊົນ ຫຼື ສະຖານທີ່ອຳນວຍຄວາມສະດວກ ຖ້າໂຮງຮຽນສາທາລະນະເຮັດໃຫ້ FAPE ມີໃຫ້ແກ່ລູກຂອງທ່ານ ແລະ ທ່ານເລືອກທີ່ຈະເອົາບ່ອນຮຽນເດັກຢູ່ໃນໂຮງຮຽນເອກະຊົນ ຫຼື ສະຖານທີ່. ເຖິງຢ່າງໃດກໍຕາມ, ໂຮງຮຽນສາທາລະນະທີ່ໂຮງຮຽນເອກະຊົນຕັ້ງຢູ່ຈະຕ້ອງລວມເອົາລູກຂອງທ່ານຢູ່ໃນປະຊາກອນທີ່ຄວາມຕ້ອງການຂອງພວກເຂົາຖືກແກ້ໄຂຕາມຂໍ້ກຳນົດຂອງ IDEA ກ່ຽວກັບເດັກນ້ອຍທີ່ພໍ່ແມ່ຂອງພວກເຂົາໄດ້ສົ່ງເຂົ້າຮຽນຢູ່ໃນໂຮງຮຽນເອກະຊົນ.

## ເງື່ອນໄຂສຳລັບການຈັດວາງເດັກນ້ອຍເຂົ້າຮຽນພຽງຝ່າຍດຽວ ໃນໂຮງຮຽນເອກະຊົນໂດຍພໍ່ແມ່ຂອງເດັກນ້ອຍດ້ວຍຄ່າໃຊ້ຈ່າຍສາທາລະນະ

ທ່ານມີສິດສະເພາະໃນເວລາທີ່ທ່ານເອົາລູກທ່ານເຂົ້າໂຮງຮຽນເອກະຊົນ ເພາະວ່າທ່ານບໍ່ເຫັນດີກັບໂຮງຮຽນລັດກ່ຽວກັບການມີໂຄງການທີ່ເໝາະສົມກັບລູກຂອງທ່ານ.

ຖ້າກ່ອນໜ້ານີ້ ລູກຂອງທ່ານໄດ້ຮັບການສຶກສາພິເສດ ແລະ ການບໍລິການທີ່ກ່ຽວຂ້ອງພາຍໃຕ້ສິດອຳນາດຂອງໂຮງຮຽນລັດ ແລະ ທ່ານເລືອກທີ່ຈະລົງທະບຽນລູກຂອງທ່ານເຂົ້າໂຮງຮຽນອະນຸບານ, ປະຖົມ ຫຼື ມັດທະຍົມໂດຍບໍ່ໄດ້ຮັບຄວາມເຫັນດີ ຫຼື ການອ້າງອີງຈາກໂຮງຮຽນລັດ, ສານ ຫຼື ເຈົ້າໜ້າທີ່ພິຈາລະນາຄະດີອາດຈະຮຽກຮ້ອງໃຫ້ໂຮງຮຽນສາທາລະນະຈ່າຍເງິນຄືນໃຫ້ທ່ານສຳລັບຄ່າໃຊ້ຈ່າຍໃນການເຂົ້າຮຽນນັ້ນຖ້າວ່າສານ ຫຼື ເຈົ້າໜ້າທີ່ພິຈາລະນາຄະດີພົບວ່າໂຮງຮຽນສາທາລະນະບໍ່ໄດ້ເຮັດໃຫ້ FAPE ມີໃຫ້ແກ່ລູກທ່ານໃນເວລາທີ່ເໝາະສົມກ່ອນການລົງທະບຽນນັ້ນ ແລະ ວ່າການບັນຈຸເຂົ້າຮຽນສ່ວນຕົວແມ່ນເໝາະສົມ. ເຈົ້າໜ້າທີ່ພິຈາລະນາຄະດີ ຫຼື ສານອາດຈະເຫັນວ່າການບັນຈຸເຂົ້າຮຽນຂອງທ່ານເໝາະສົມ ເຖິງແມ່ນວ່າການບັນຈຸເຂົ້າຮຽນບໍ່ໄດ້ຕາມມາດຕະຖານຂອງລັດທີ່ນຳໃຊ້ກັບການສຶກສາທີ່ສະໜອງໂດຍ TEA ແລະ ໂຮງຮຽນ.

## ຂໍ້ຈຳກັດໃນການຊົດເຊີຍ

